ສຳນັກງານໃຫຍ່

ເລກທີ: 040 /ທຄຕລ.ສພບ.2025.
ນະຄອນຫຼວງວຽງຈັນ, ວັນທີ: 06 ສິງຫາ 2025

# ໜັງສືແຈ້ງເຊີນ

**ຮຽນ: ທ່ານຜູ້ຖືຮຸ້ນຂອງທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ, ທີ່ນັບຖື.**
**ເລື່ອງ: ເຊີນເຂົ້າຮ່ວມກອງປະຊຸມຜູ້ຖືຮຸ້ນ ທຄຕລ ສະໄໝວິສາມັນ ປະຈຳປີ 2025.**

- ອີງຕາມມະຕິກອງປະຊຸມສະພາບໍລິຫານ ທຄຕລ ສະໄໝວິສາມັນ ຄັ້ງທີ 03 ເລກທີ 034/ສພທ.ທຄຕລ.2025, ລົງວັນທີ 10/07/2025.

ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ ຂໍຖືເປັນກຽດຮຽນເຊີນທ່ານຜູ້ຖືຮຸ້ນ ທຄຕລ ເຂົ້າຮ່ວມ **ກອງປະຊຸມຜູ້ຖືຮຸ້ນ ທຄຕລ ສະໄໝວິສາມັນ ປະຈຳປີ 2025** ໃນວັນສຸກ ວັນທີ 05/09/2025 ເວລາ 14:30 ໂມງ (ລົງທະບຽນເວລາ 13:00 – 14:30 ໂມງ) ທີ່ຫ້ອງປະຊຸມ Grand Ballroom, ໂຮງແຮມລາວພຣາຊາ, ນະຄອນຫຼວງວຽງຈັນ ເພື່ອພິຈາລະນາ ແລະ ຮັບຮອງເອົາບັນຫາຕ່າງໆ ຕາມວາລະກອງປະຊຸມທີ່ຄັດຕິດມາພ້ອມນີ້.

ທຄຕລ ໄດ້ກຳນົດເອົາວັນທີ **29/07/2025 ເປັນມື້ປິດປຶ້ມບັນຊີທະບຽນຜູ້ຖືຮຸ້ນ ເພື່ອກຳນົດສິດຂອງຜູ້ຖືຮຸ້ນໃນການເຂົ້າຮ່ວມ ກອງປະຊຸມ ທຄຕລ ສະໄໝວິສາມັນ ປະຈຳປີ 2025** ເຊິ່ງໄດ້ເປີດເຜີຍຂໍ້ມູນຮຽບຮ້ອຍແລ້ວ.

ສຳຫຼັບທ່ານຜູ້ຖືຮຸ້ນທີ່ບໍ່ສະດວກເຂົ້າຮ່ວມດ້ວຍຕົນເອງ ທ່ານສາມາດມອບສິດໃຫ້ສະມາຊິກສະພາບໍລິຫານອິດສະລະ ທ່ານໃດໜຶ່ງເປັນຜູ້ຕາງເຂົ້າຮ່ວມປະຊຸມແທນ ໂດຍປະກອບແບບຟອມໃບມອບສິດທີ່ຄັດຕິດມາພ້ອມນີ້ ແລ້ວສົ່ງໃຫ້ ທຄຕລ ທາງອີເມວ: bcelhqv@bcel.com.la ກ່ອນວັນທີ **04/09/2025.**

ຫວັງຢ່າງຍິ່ງວ່າ ທ່ານຄົງສະຫຼະເວລາອັນມີຄ່າເຂົ້າຮ່ວມກອງປະຊຸມຄັ້ງນີ້ດ້ວຍ.

**ປະທານສະພາບໍລິຫານ**

**ທ່ານ ສຸລິວັດ ສຸວັນນະຈູມຄຳ**

# ເອກະສານຄັດຕິດ

1. **ເອກະສານຄັດຕິດ 01:** ວາລະກອງປະຊຸມ ຜູ້ຖືຮຸ້ນ ທຄຕລ ສະໄໝວິສາມັນ ປະຈຳປີ 2025;
2. **ເອກະສານຄັດຕິດ 02:** ບົດບັນທຶກກອງປະຊຸມສາມັນ ຜູ້ຖືຮຸ້ນ ທຄຕລ ປະຈຳປີ 2024;
3. **ເອກະສານຄັດຕິດ 03:** ການດັດແກ້ແຜນທຸລະກິດ ຂອງ ທຄຕລ ປະຈຳປີ 2025;
4. **ເອກະສານຄັດຕິດ 04:** ຊີວະປະຫວັດ ທ່ານ ນ. ບຸນຕາ ດາຣາວີ;
5. **ເອກະສານຄັດຕິດ 05:** ໃບມອບສິດ-Poxy
6. **ເອກະສານຄັດຕິດ 06:** ລະບຽບສຳລັບການດຳເນີນ ກອງປະຊຸມຜູ້ຖືຮຸ້ນ ທຄຕລ
7. **ເອກະສານຄັດຕິດ 07:** ຄຳແນະນຳກ່ຽວກັບເອກະສານ ແລະ ຫຼັກຖານທີ່ຕ້ອງນຳມາສະເໜີໂຕເພື່ອເຂົ້າຮ່ວມກອງປະຊຸມ
8. **ເອກະສານຄັດຕິດ 08:** ຄຳແນະນຳກ່ຽວກັບການລົງຄະແນນສຽງ
9. **ເອກະສານຄັດຕິດ 09:** ແຜນທີ່ສະຖານທີ່ປະຊຸມ

## ❖ ໝາຍເຫດ:

1. ຜູ້ຖືຮຸ້ນແຕ່ລະທ່ານສາມາດດາວໂຫຼດເອົາໜັງສືແຈ້ງເຊີນ ພ້ອມເອກະສານຄັດຕິດໄດ້ທີ່ເວັບໄຊຂອງ ທຄຕລ www.bcel.com.la ແລະ ເວັບໄຊຂອງຕະຫຼາດຫຼັກຊັບລາວ www.lsx.com.la ຫຼື ຈະໄປຮັບເອົາໜັງສືເຊີນປະຊຸມທີ່ລະບຸສິດຂອງທ່ານໃນການເຂົ້າຮ່ວມກອງປະຊຸມ (ມີລະຫັດບາໂຄດ) ຢູ່ຕະຫຼາດຫຼັກຊັບລາວ ທີ່ຊັ້ນ 4 ພະແນກຊຳລະສະສາງ ແລະ ຮັບຝາກຫຼັກຊັບ, ບ້ານໂພນທັນເໜືອ, ຖະໜົນ T4, ເມືອງໄຊເສດຖາ, ນະຄອນຫຼວງວຽງຈັນ. ໂທລະສັບ +856 (21) 454361-4 ເລີ່ມແຕ່ວັນທີ 06/08/2025 ເປັນຕົ້ນໄປ.
2. ສຳລັບຜູ້ຖືຮຸ້ນທີ່ຈະເຂົ້າຮ່ວມປະຊຸມດ້ວຍຕົນເອງ ແລະ ຜູ້ຕາງໜ້າກະລຸນານຳບັດປະຈຳຕົວ ຫຼື ສຳມະໂນຄົວ ຫຼື ໜັງສືຜ່ານແດນ (ສຳລັບຜູ້ຖືຮຸ້ນຕ່າງປະເທດ) ມາໃນວັນປະຊຸມ ເພື່ອສະເໜີໂຕເວລາລົງທະບຽນເຂົ້າຮ່ວມກອງປະຊຸມ. ລາຍລະອຽດເອກະສານຕ່າງໆທີ່ຕ້ອງນຳມາສະແດງໃນເວລາເຂົ້າຮ່ວມກອງປະຊຸມໄດ້ລະບຸໃວ້ໃນຄຳແນະນຳກ່ຽວກັບເອກະສານ ແລະ ຫຼັກຖານທີ່ຕ້ອງນຳມາສະເໜີໂຕ ເພື່ອເຂົ້າຮ່ວມກອງປະຊຸມ ທີ່ຄັດຕິດມາພ້ອມນີ້.
3. ສຳລັບຜູ້ຖືຮຸ້ນທີ່ຈະໃຫ້ຜູ້ຕາງໜ້າເຂົ້າມາຮ່ວມກອງປະຊຸມ ແລະ ລົງຄະແນນສຽງແທນ, ກະລຸນາປະກອບຂໍ້ມູນພ້ອມລົງລາຍເຊັນໃນໃບມອບສິດຕາມເອກະສານທີ່ໄດ້ຂັດຕິດມາພ້ອມນີ້ ໃຫ້ຖືກຕ້ອງ ແລະ ຄົບຖ້ວນ.

## ❖ ຜູ້ປະສານງານຝ່າຍ ທຄຕລ

1) ທ່ານ ປອ. ອິນປົງ ສີລີພູທອນ, ໂທ: 020 2888 5353
2) ທ່ານ ພອນນະລັດ ກອງວົງສາ, ໂທ: 020 2222 3455

# ວາລະ
# ກອງປະຊຸມ ຜູ້ຖືຮຸ້ນ ທຄຕລ ສະໄໝວິສາມັນ ປະຈຳປີ 2025
# (ຄັ້ງວັນທີ 05/09/2025)

**ວາລະທີ 01: ພິຈາລະນາ ແລະ ຮັບຮອງບົດບັນທຶກກອງປະຊຸມຜູ້ຖືຮຸ້ນ ທຄຕລ ສະໄໝສາມັນ ປະຈຳປີ 2024.**

ທຄຕລ ໄດ້ມີບົດບັນທຶກກອງປະຊຸມຜູ້ຖືຮຸ້ນ ຂອງ ທຄຕລ ສະໄໝສາມັນ ປະຈຳປີ 2024 ຈັດຂຶ້ນໃນວັນທີ 30/04/2025 ຕາມລາຍລະອຽດທີ່ຢູ່ໃນ **(ເອກະສານຄັດຕິດ 02)** ເຊິ່ງບົດບັນທຶກດັ່ງກ່າວ ໄດ້ຖືກເປີດເຜີຍຢ່າງສອດຄ່ອງກັບກົດລະບຽບທີ່ກ່ຽວຂ້ອງແລ້ວ.

**ຄຳເຫັນຂອງສະພາບໍລິຫານ:**

ສະພາບໍລິຫານໄດ້ພິຈາລະນາແລ້ວ ເຫັນວ່າ ບົດບັນທຶກກອງປະຊຸມດັ່ງກ່າວ ມີເນື້ອໃນຖືກຕ້ອງ ແລະ ຄົບຖ້ວນແລ້ວ ຈຶ່ງເຫັນຄວນສະເໜີໃຫ້ກອງປະຊຸມຜູ້ຖືຮຸ້ນພິຈາລະນາຮັບຮອງເອົາ.

**ຄະແນນສຽງທີ່ຕ້ອງໃຊ້:**

ວາລະນີ້ຈະຖືວ່າຖືກຮັບຮອງ ເມື່ອມີຄະແນນສຽງເຫັນດີຫຼາຍກວ່າເຄິ່ງໜຶ່ງຂອງຈຳນວນສຽງທີ່ເຂົ້າຮ່ວມກອງປະຊຸມ.

**ວາລະທີ 02: ພິຈາລະນາ ແລະ ຮັບຮອງ ການດັດແກ້ແຜນທຸລະກິດ ຂອງ ທຄຕລ ປະຈຳປີ 2025 (ເອກະສານຄັດຕິດ 03)**

ສະເໜີກອງປະຊຸມ ພິຈາລະນາ ແລະ ຮັບຮອງເອົາການດັດແກ້ແຜນ ປະຈຳປີ 2025 ເຊິ່ງມີຄາດໝາຍບາງຕົວເລກສຳຄັນ ດັ່ງນີ້:

- **ຍອດຊັບສິນ:** ແຜນເດີມບໍ່ຫຼຸດ 150,620 ຕື້ກີບ ສະເໜີດັດແກ້ໃໝ່ ເປັນບໍ່ຫຼຸດ 157,000 ຕື້ກີບ ທຽບໃສ່ປະຕິບັດປີ 2024 ເພີ່ມຂຶ້ນ 10.41%;
- **ຍອດເງິນຝາກ:** ແຜນເດີມບໍ່ຫຼຸດ 138,000 ຕື້ກີບ ສະເໜີດັດແກ້ໃໝ່ ເປັນບໍ່ຫຼຸດ 145,000 ຕື້ກີບ ທຽບໃສ່ປະຕິບັດປີ 2024 ເພີ່ມຂຶ້ນ 8.91%;
- **ຍອດສິນເຊື່ອທັງໝົດ:** ຮັກສາຕົວເລກຕາມແຜນເດີມບໍ່ຫຼຸດ ຈຳນວນ 65,700 ຕື້ກີບ ທຽບໃສ່ປະຕິບັດປີ 2024 ເພີ່ມຂຶ້ນ 5.69%;
- **ໜີ້ NPL ທັງໝົດ:** ຮັກສາຕົວເລກຕາມແຜນເດີມ ບໍ່ເກີນ 3% ຂອງຍອດສິນເຊື່ອທັງໝົດ;
- **ກຳໄລສຸດທິ:** ແຜນເດີມບໍ່ຫຼຸດ 550 ຕື້ກີບ ສະເໜີດັດແກ້ໃໝ່ເປັນບໍ່ຫຼຸດ 576 ຕື້ກີບ ທຽບໃສ່ປະຕິບັດປີ 2024 ເພີ່ມຂຶ້ນ 28.12%;

- **ແຜນປະກອບວັດຖຸເຕັກນິກ, ກໍ່ສ້າງ ແລະ ສ້ອມແປງ:** ແຜນເດີມຈຳນວນ 804.67 ຕື້ກີບ ສະເໜີດັດແກ້ໃໝ່ເປັນ 832.54 ຕື້ກີບ, ເພີ່ມຂຶ້ນຈຳນວນ 27.87 ຕື້ກີບ ເພື່ອປະກອບເຂົ້າໃນໜ້າວຽກຫຼັກຄື: ວຽກ Artificial Intelligence (AI), AI Face Recognition ແລະ Cyber Security.

**ຄຳເຫັນຂອງສະພາບໍລິຫານ:**

ສະພາບໍລິຫານໄດ້ພິຈາລະນາແລ້ວ ແລະ ເຫັນດີສະເໜີໃຫ້ກອງປະຊຸມຜູ້ຖືຮຸ້ນພິຈາລະນາຮັບຮອງເອົາ.

**ຄະແນນສຽງທີ່ຕ້ອງໃຊ້:**

ວາລະນີ້ ຈະຖືວ່າຖືກຮັບຮອງເມື່ອມີຄະແນນສຽງເຫັນດີຫຼາຍກວ່າເຄິ່ງໜຶ່ງຂອງຈຳນວນສຽງທີ່ເຂົ້າຮ່ວມກອງປະຊຸມ.

**ວາລະທີ 03: ພິຈາລະນາ ແລະ ຮັບຮອງ ການແຕ່ງຕັ້ງຮອງປະທານສະພາບໍລິຫານ ທຄຕລ (ເອກະສານຄັດຕິດ 04)**

ສະເໜີກອງປະຊຸມພິຈາລະນາຮັບຮອງການແຕ່ງຕັ້ງ **ທ່ານ ນ. ບຸນຕາ ດາລາວີ** ພະນັກງານບຳນານ ທະນາຄານແຫ່ງ ສປປ ລາວ ເປັນຮອງປະທານສະພາບໍລິຫານ ທຄຕລ ຜູ້ໃໝ່ ຕາມຂໍ້ຕົກລົງສະບັບເລກທີ 1523/ກງ, ລົງວັນທີ 20/05/2025, ເພື່ອປ່ຽນແທນ **ທ່ານ ປອ ອາຄົມ ປຣະເສີດ** ທີ່ໄດ້ສິ້ນສຸດອາຍຸການເປັນຮອງປະທານສະພາບໍລິຫານ ການແຕ່ງຕັ້ງຄັ້ງນີ້ເປັນການແຕ່ງຕັ້ງເພື່ອປ່ຽນແທນສະເພາະບຸກຄົນ. ສຳລັບບັນດາກຳມະການສະພາບໍລິຫານທ່ານອື່ນໆ ຍັງຄົງຮັກສາຕາມເດີມ.

ດັ່ງນັ້ນ, ຈາກການຮັບຮອງໃນຄັ້ງນີ້ ຈະເຮັດໃຫ້ສະພາບໍລິຫານຂອງ ທຄຕລ ຊຸດໃໝ່ ປະກອບດ້ວຍ **08** ທ່ານ ດັ່ງນີ້:

| | |
|---|---|
| 1. ທ່ານ ສຸລິວັດ ສຸວັນນະຈູມຄຳ | ຮອງລັດຖະມົນຕີກະຊວງການເງິນ, ປະທານສະພາບໍລິຫານ |
| 2. ທ່ານ ນ. ບຸນຕາ ດາຣາວີ | ກຳມະການອິດສະລະ, ຮອງປະທານສະພາບໍລິຫານ |
| 3. ທ່ານ ນ. ສາຍສະໝອນ ຈັນທະຈັກ | ຜູ້ອຳນວຍການ ທຄຕລ, ກຳມະການ |
| 4. ທ່ານ ປະສົມເພັດ ຄຳຕັນ | ກຳມະການ |
| 5. ທ່ານ Arnaud DELAUNAY | ກຳມະການ |
| 6. ທ່ານ ຮສ. ທອງເພັດ ຈັນທະນີວົງ | ສະມາຊິກອິດສະລະ, ກຳມະການ |
| 7. ທ່ານ ນ. ລັດດາວັນ ຊົງວິໄລ | ສະມາຊິກອິດສະລະ, ກຳມະການ |
| 8. ທ່ານ ສອນໄຊ ສີລາເພັດ | ສະມາຊິກອິດສະລະ, ກຳມະການ |

**ຄຳເຫັນຂອງສະພາບໍລິຫານ:**

ສະພາບໍລິຫານໄດ້ພິຈາລະນາແລ້ວ ແລະ ເຫັນດີສະເໜີໃຫ້ກອງປະຊຸມຜູ້ຖືຮຸ້ນພິຈາລະນາຮັບຮອງເອົາ.

**ຄະແນນສຽງທີ່ຕ້ອງໃຊ້:**

ວາລະນີ້ຈະຖືວ່າຖືກຮັບຮອງ ເມື່ອມີຄະແນນສຽງເຫັນດີຫຼາຍກວ່າເຄິ່ງໜຶ່ງຂອງຈຳນວນສຽງທີ່ເຂົ້າຮ່ວມກອງປະຊຸມ.

ສໍານັກງານໃຫຍ່

ເລກທີ: 017 /ທຄຕລ ສຜທ..2025

# ບົດບັນທຶກ

ນະຄອນຫຼວງວຽງຈັນ, ວັນທີ: 14 MAY 2025

**ກອງປະຊຸມສາມັນຜູ້ຖືຮຸ້ນ ທຄຕລ ປະຈໍາປີ 2024.**

**ວັນທີ 30/04/2025**

ກອງປະຊຸມສາມັນຜູ້ຖືຮຸ້ນຂອງທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ (ທຄຕລ) ປະຈໍາປີ 2024 (ຕໍ່ໄປນີ້ຮຽກວ່າ "ກອງປະຊຸມ") ໄດ້ຈັດຂຶ້ນໃນເວລາ 14:30 ໂມງ ຂອງວັນພຸດ, ວັນທີ 30 ເມສາ 2025 ທີ່ ໂຮງແຮມລາວພລາຊາ ນະຄອນຫຼວງວຽງຈັນ, ໂດຍການເປັນປະທານຂອງ **ທ່ານ ປອ. ອາຄົມ ປຣະເສີດ,** ຮອງປະທານສະພາບໍລິຫານ ທຄຕລ ພ້ອມດ້ວຍສະມາຊິກສະພາບໍລິຫານ ທຄຕລ, ມີຜູ້ຖືຮຸ້ນເຂົ້າຮ່ວມດ້ວຍຕົນເອງຈໍານວນ **43** ທ່ານ, ຜູ້ມອບສິດຈໍານວນ **231** ທ່ານ ຊຶ່ງລວມຈໍານວນຮຸ້ນທັງໝົດທີ່ເຂົ້າຮ່ວມກອງປະຊຸມເທົ່າກັບ **836,449,765** ຮຸ້ນ, ນັບທັງ **81,244,345** ຮຸ້ນ ທີ່ຖືກມອບສິດ, ບັນລຸອັດຕາສ່ວນ **80.535%** ຂອງຈໍານວນຮຸ້ນ ທຄຕລ ທັງໝົດ ແລະ ຖືວ່າຄົບອົງປະຊຸມ ເພື່ອໃຫ້ສາມາດດໍາເນີນກອງປະຊຸມໄດ້ຕາມກົດລະບຽບຂອງ ທຄຕລ ແລະ ກົດໝາຍທີ່ກ່ຽວຂ້ອງ. ສໍາລັບຮຸ້ນທີ່ບໍ່ໄດ້ເຂົ້າຮ່ວມກອງປະຊຸມ ມີຈໍານວນ **202,166,735** ຮຸ້ນ ເທົ່າກັບ **19.465%** ຂອງຈໍານວນຮຸ້ນ ທຄຕລ ທັງໝົດ.

**ຄະນະປະທານ ກອງປະຊຸມ ປະກອບມີ:**

1. ທ່ານ ປອ ອາຄົມ ປຣະເສີດ, ຮອງປະທານສະພາບໍລິຫານ, ເຮັດໜ້າທີ່ເປັນປະທານກອງປະຊຸມ;
2. ທ່ານ ນ. ສາຍສະໝອນ ຈັນທະຈັກ, ຜູ້ອໍານວຍການ ທຄຕລ, ສະມາຊິກສະພາບໍລິຫານ;
3. ທ່ານ ປະສົມເພັດ ຄໍາຕັນ, ສະມາຊິກສະພາບໍລິຫານ;
4. ທ່ານ ຣສຈ. ທອງເພັດ ຈັນທະນິວົງ, ສະມາຊິກສະພາບໍລິຫານອິດສະຫຼະ;
5. ທ່ານ ສອນໄຊ ສີລາເພັດ, ສະມາຊິກສະພາບໍລິຫານອິດສະຫຼະ;
6. ທ່ານນາງ ລັດດາວັນ ຊົງວິໄລ, ສະມາຊິກສະພາບໍລິຫານອິດສະຫຼະ.
7. ທ່ານ ສຸລິວັດ ສຸວັນນະຈຸມຄໍາ, ຮອງລັດຖະມົນຕີກະຊວງການເງິນ; ຕາງໜ້າຜູ້ຖືຮຸ້ນກະຊວງການເງິນ;
8. ທ່ານ Michael DE CLERCQ, ຜູ້ຕາງໜ້າຄູ່ຮ່ວມ ຍຸດທະສາດ, COFIBRED;

ປະທານກອງປະຊຸມ ໄດ້ແນະນໍາລະບຽບການດໍາເນີນກອງປະຊຸມ ແລະ ວິທີລົງຄະແນນສຽງ. ຈາກນັ້ນກອງປະຊຸມຈຶ່ງໄດ້ດໍາເນີນແຕ່ລະວາລະຕາມລໍາດັບ.

**ກອງປະຊຸມ ໄດ້ພິຈາລະນາ, ມີຄໍາເຫັນ ແລະ ມີການຕົກລົງໃນແຕ່ລະວາລະດັ່ງນີ້:**

**ວາລະທີ 1: ພິຈາລະນາ ແລະ ຮັບຮອງບົດບັນທຶກກອງປະຊຸມຜູ້ຖືຮຸ້ນ ສະໄໝສາມັນ ທຄຕລ ປະຈໍາປີ 2023**

**ທ່ານ ນ. ສາຍສະໝອນ ຈັນທະຈັກ**, ຜູ້ອໍານວຍການ ທຄຕລ ໄດ້ລາຍງານຫຍໍ້ເນື້ອໃນບົດບັນທຶກກອງປະຊຸມຜູ້ຖືຮຸ້ນສະໄໝສາມັນ ປະຈໍາປີ 2023 ທີ່ໄດ້ຈັດຂຶ້ນໃນວັນທີ 29 ເມສາ 2024, ເຊິ່ງບົດບັນທຶກດັ່ງກ່າວ

ໄດ້ຖືກເປີດເຜີຍຢ່າງສອດຄ່ອງກັບກົດລະບຽບທີ່ກ່ຽວຂ້ອງແລ້ວ, ສະເໜີກອງປະຊຸມ ພິຈາລະນາຮັບຮອງເອົາບົດບັນທຶກດັ່ງກ່າວ.

ປະທານກອງປະຊຸມ ໄດ້ສະເໜີໃຫ້ຜູ້ຖືຮຸ້ນມີຄຳຖາມຕໍ່ວາລະນີ້ ເຊິ່ງມີບາງຄຳເຫັນ ດັ່ງນີ້:

**ທ່ານ ສອນນາລິນ ແສງມະນີ** ຫົວໜ້າກອງເລຂາກອງປະຊຸມໄດ້ແຈ້ງຕໍ່ກອງປະຊຸມເພື່ອຮັບຊາບ ກ່ຽວກັບ ການປັບປຸງບົດບັນທຶກບາງຈຸດຕາມຄຳເຫັນຈາກຜູ້ຖືຮຸ້ນໄລຍະຜ່ານມາເຊັ່ນ: ບົດບັນທຶກກອງປະຊຸມໄດ້ເຮັດເປັນ 2 ພາສາ ສະບັບພາສາລາວ ແລະ ພາສາອັງກິດ ໄດ້ເປີດເຜີຍຜ່ານຕະຫຼາດຫຼັກຊັບລາວແລ້ວ, ໂດຍໄດ້ຮັບຄວາມຮ່ວມມືຈາກຜູ້ຖືຮຸ້ນຈຳນວນໜຶ່ງໄດ້ປະກອບຄຳເຫັນແນະນຳໃນການປັບປຸງບາງຄຳສັບໃນບົດບັນທຶກສະບັບພາສາອັງກິດໃຫ້ຖືກຕ້ອງຂຶ້ນກວ່າເດີມ ເຊິ່ງກອງເລຂາກໍ່ໄດ້ມີການແກ້ໄຂບາງຄຳສັບໃຫ້ຖືກຕ້ອງຕາມຄຳແນະນຳ, ແຕ່ກໍ່ມີບາງຄຳສັບ ບໍ່ໄດ້ມີການປັບປຸງຄືນ ເພາະວ່າຄວາມໝາຍຍັງຄົງສອດຄ່ອງກັບຄວາມໝາຍຂອງສະບັບພາສາລາວຢູ່ ພຽງແຕ່ເປັນການເລືອກໃຊ້ຄຳສັບທີ່ອາດຈະບໍ່ແທດເໝາະກັບຕົ້ນສະບັບເຈົ້າຂອງພາສາ. ສະນັ້ນ ຈຶ່ງບໍ່ໄດ້ອັບເດດບົດບັນທຶກທີ່ເປີດເຜີຍເທິງລະບົບຂອງຕະຫຼາດຫຼັກຊັບລາວ; (ສະບັບສົມບູນທີ່ກອງປະຊຸມຮັບຮອງ ສາມາດດາວໂຫຼດທີ່ເວັບໄຊ ທຄຕລ)

ກອງປະຊຸມ ໄດ້ມີມະຕິຮັບຮອງດ້ວຍຄະແນນສຽງສ່ວນຫຼາຍຂອງຜູ້ຖືຮຸ້ນທີ່ເຂົ້າຮ່ວມກອງປະຊຸມດັ່ງນີ້:

- **ເຫັນດີ:** ຈຳນວນ 836,449,765 ສຽງ, ເທົ່າກັບ 100% ຂອງຈຳນວນສຽງທັງໝົດທີ່ເຂົ້າຮ່ວມກອງປະຊຸມ;
- **ບໍ່ເຫັນດີ:** ຈຳນວນ 0 ສຽງ, ເທົ່າກັບ 0% ຂອງຈຳນວນສຽງທັງໝົດທີ່ເຂົ້າຮ່ວມກອງປະຊຸມ.

**ວາລະທີ 02: ພິຈາລະນາ ແລະ ຮັບຮອງ ບົດລາຍງານຜົນການດຳເນີນງານ ແລະ ເອກະສານລາຍງານການເງິນຂອງ ທຄຕລ ປະຈຳປີ 2024**

**ທ່ານ ນ. ສາຍສະໝອນ ຈັນທະຈັກ**, ຜູ້ອຳນວຍການ ທຄຕລ ໄດ້ລາຍງານໃຫ້ກອງປະຊຸມຮັບຊາບກ່ຽວກັບ ຜົນການດຳເນີນງານ ແລະ ເອກະສານລາຍງານການເງິນຂອງ ທຄຕລ ປະຈຳປີ 2024 ທີ່ຜ່ານການກວດສອບແລ້ວ ເຊິ່ງມີບາງຂໍ້ມູນ ດັ່ງນີ້:

- ຈັດກອງປະຊຸມສາມັນຜູ້ຖືຮຸ້ນ ທຄຕລ ປະຈຳປີ 2023 ພ້ອມທັງສຳເລັດການຈ່າຍເງິນປັນຜົນ ຈຳນວນ 300 ກີບ/ຮຸ້ນ ໃຫ້ແກ່ຜູ້ຖືຮຸ້ນ ທຄຕລ;
- ຈັດກອງປະຊຸມສະພາບໍລິຫານ ທຄຕລ 11 ຄັ້ງ (ສະໄໝສາມັນ 04 ຄັ້ງ ແລະ ສະໄໝວິສາມັນ 07 ຄັ້ງ);
- ຈັດກອງປະຊຸມສະຫຼຸບການເຄື່ອນໄຫວວຽກງານຂອງ ທຄຕລ 04 ຄັ້ງ (ກອງປະຊຸມປະຈຳປີ 01 ຄັ້ງ ແລະ ໄຕມາດ 03 ຄັ້ງ);
- ຈັດພິທີສະເຫຼີມສະຫຼອງວັນຫັນເປັນທຸລະກິດ ທຄຕລ ຄົບຮອບ 35 ປີ;
- ທົບທວນຜົນການຈັດຕັ້ງປະຕິບັດແຜນຍຸດທະສາດ 2021 – 2025;
- ດຳເນີນການຄົ້ນຄວ້າກຳນົດແຜນຍຸດທະສາດ 05 ປີສະບັບໃໝ່ ຂອງ ທຄຕລ ໄລຍະ 2025 – 2029;
- ຈັດຂັ້ນສາຂາ ແລະ ໜ່ວຍບໍລິການຂອງ ທຄຕລ ທົ່ວລະບົບ ປະຈຳປີ 2024 ແລະ ກຳນົດ KPI ຂອງສາຂາປະຈຳປີ 2024;
- ໄດ້ພັດທະນາເຄື່ອງມືດ້ານໄອທີ, ຜະລິດຕະພັນ ການບໍລິການ ໃຫ້ຕອບສະໜອງຄວາມຕ້ອງການຂອງລູກຄ້າ;

- ເປີດໜ່ວຍບໍລິການ 02 ແຫ່ງ ຄື: ໜ່ວຍບໍລິການໄຊມຸງຄຸນ ຂຶ້ນກັບສາຂານະຄອນຫຼວງວຽງຈັນ ແລະ ໜ່ວຍບໍລິການວັງເຕົ່າ-ຊ່ອງເມັກ ຂຶ້ນກັບສາຂາຈຳປາສັກ;
- ຮ່ວມມືທາງດ້ານທຸລະກິດກັບພາກສ່ວນຕ່າງໆທີ່ສຳຄັນທັງພາຍໃນ ແລະ ຕ່າງປະເທດ;
- ໄດ້ຮັບລາງວັນ: ລາງວັນຜູ້ອອກບັດດີເດັ່ນ ປະຈຳປີ 2023 ຂອງບໍລິສັດ Union Pay ສາກົນ; ລາງວັນຜົນງານດີເດັ່ນໃນການປະຕິບັດພັນທະສ່ວຍສາອາກອນເຂົ້າງົບປະມານແຫ່ງລັດ ປະຈຳປີ 2022; ລາງວັນດີເດັ່ນດ້ານຄຸນນະພາບທຸລະກຳເງິນໂອນຕ່າງປະເທດໃນການຊຳລະສະສາງເປັນສະກຸນໂດລາ ປະຈຳປີ 2024 (MT103) ຈາກທະນາຄານ JP Morgan Chase Bank ແລະ ໄດ້ຮັບ 02 ລາງວັນຂອງ ບໍລິສັດຈົດທະບຽນໃນຕະຫຼາດຫຼັກຊັບລາວ ຄື: ລາງວັນການເປີດເຜີຍຂໍ້ມູນດີເດັ່ນ ປະເພດທີ I ປະຈຳປີ 2024 ແລະ ລາງວັນການຄຸ້ມຄອງບໍລິຫານດີເດັ່ນ ປະເພດທີ I ປະຈຳປີ 2024.

ຜົນການດຳເນີນທຸລະກິດປະຈຳປີ 2024 ທີ່ໄດ້ຮັບການກວດສອບຈາກ ບໍລິສັດ EY ແລະ ຮັບຮອງຈາກສະພາບໍລິຫານ ທຄຕລ ມີດັ່ງນີ້:

- **ຍອດຊັບສິນ:** 142,191 ຕື້ກີບ, ທຽບໃສ່ແຜນການປີ 2024 ປະຕິບັດໄດ້ 100.99%;
- **ຍອດເງິນຝາກ:** 133,135 ຕື້ກີບ, ທຽບໃສ່ແຜນການປີ 2024 ປະຕິບັດໄດ້ 102.41%;
- **ຍອດເງິນກູ້ທັງໝົດ:** 62,162 ຕື້ກີບ, ທຽບໃສ່ແຜນການປີ 2024 ປະຕິບັດໄດ້ 104.53%;
- **ອັດຕາສ່ວນ NPL:** 2.79%;
- **ກຳໄລສຸດທິ:** 449 ຕື້ກີບ, ທຽບໃສ່ແຜນການປີ 2024 ປະຕິບັດໄດ້ 149.85%.

ປະທານກອງປະຊຸມ ໄດ້ສະເໜີໃຫ້ຜູ້ຖືຮຸ້ນມີຄຳຖາມ, ແຕ່ບໍ່ມີຄຳເຫັນ ຫຼື ຄຳຖາມໃນວາລະນີ້.

ກອງປະຊຸມ ໄດ້ມີມະຕິຮັບຮອງດ້ວຍຄະແນນສຽງສ່ວນຫຼາຍຂອງຜູ້ຖືຮຸ້ນທີ່ເຂົ້າຮ່ວມກອງປະຊຸມດັ່ງນີ້:

- **ເຫັນດີ:** ຈຳນວນ 836,449,765 ສຽງ, ເທົ່າກັບ 100% ຂອງຈຳນວນສຽງທັງໝົດທີ່ເຂົ້າຮ່ວມກອງປະຊຸມ;
- **ບໍ່ເຫັນດີ:** ຈຳນວນ 0 ສຽງ, ເທົ່າກັບ 0% ຂອງຈຳນວນສຽງທັງໝົດທີ່ເຂົ້າຮ່ວມກອງປະຊຸມ.

**ວາລະທີ 03: ພິຈາລະນາ ແລະ ຮັບຮອງການຈັດສັນກຳໄລປະຈຳປີ 2024 ເຂົ້າຄັງຕ່າງໆ ແລະ ຈ່າຍເງິນປັນຜົນ**

***ທ່ານ ນ. ສາຍສະໝອນ ຈັນທະຈັກ***, ຜູ້ອຳນວຍການ ທຄຕລ ໄດ້ສະເໜີກອງປະຊຸມ ພິຈາລະນາການຈັດສັນກຳໄລຫຼັງອາກອນປະຈຳປີ 2024 ເພື່ອຈ່າຍເຂົ້າຄັງຕ່າງໆຕາມລະບຽບການ ແລະ ຈ່າຍເງິນປັນຜົນໃຫ້ຜູ້ຖືຮຸ້ນ ດັ່ງນີ້:

- ແບ່ງເຂົ້າຄັງສະສົມຕາມລະບຽບການ: **10%;**
- ຈ່າຍເງິນປັນຜົນ: **100 ກີບ/ຮຸ້ນ** ລວມມູນຄ່າເງິນປັນຜົນທັງໝົດ **103,861,650,000.00 ກີບ**
- ສ່ວນທີ່ເຫຼືອເອົາເຂົ້າຄັງຂະຫຍາຍທຸລະກິດ ທັງໝົດ;
- ມື້ຈ່າຍເງິນປັນຜົນ: **14 ພຶດສະພາ 2025.**

ປະທານກອງປະຊຸມ ໄດ້ສະເໜີໃຫ້ຜູ້ຖືຮຸ້ນມີຄຳຖາມ, ແຕ່ບໍ່ມີຄຳເຫັນ ຫຼື ຄຳຖາມໃນວາລະນີ້;

ກອງປະຊຸມ ໄດ້ມີມະຕິຮັບຮອງດ້ວຍຄະແນນສຽງສ່ວນຫຼາຍຂອງຜູ້ຖືຮຸ້ນທີ່ເຂົ້າຮ່ວມກອງປະຊຸມດັ່ງນີ້:

- **ເຫັນດີ:** ຈຳນວນ 836,449,765 ສຽງ, ເທົ່າກັບ 100% ຂອງຈຳນວນສຽງທັງໝົດທີ່ເຂົ້າຮ່ວມກອງປະຊຸມ;
- **ບໍ່ເຫັນດີ:** ຈຳນວນ 0 ສຽງ, ເທົ່າກັບ 0% ຂອງຈຳນວນສຽງທັງໝົດທີ່ເຂົ້າຮ່ວມກອງປະຊຸມ.

**ວາລະທີ 04: ພິຈາລະນາ ແລະ ຮັບຮອງເອົາແຜນການປະຈຳປີ 2025**

**ທ່ານ ນ ສາຍສະໝອນ ຈັນທະຈັກ**, ຜູ້ອຳນວຍການ ທຄຕລ ໄດ້ສະເໜີກອງປະຊຸມພິຈາລະນາ ຮັບຮອງເອົາແຜນການ ປະຈຳປີ 2025 ເຊິ່ງມີຄາດໝາຍບາງຕົວເລກສຳຄັນທຽບໃສ່ຕົວເລກການປະຕິບັດປີ 2024 ມີດັ່ງນີ້:

- **ຍອດຊັບສິນ**: ບໍ່ຫຼຸດ 150,620 ຕື້ກີບ ທຽບໃສ່ຈັດຕັ້ງປະຕິບັດປີ 2024 ເພີ່ມຂຶ້ນ 5.93%;
- **ຍອດເງິນຝາກ:** ບໍ່ຫຼຸດ 138,000 ຕື້ກີບ ທຽບໃສ່ທ້າຍປີ 2024 ເພີ່ມຂຶ້ນ 3.65%;
- **ຍອດເງິນກູ້ທັງໝົດ:** ບໍ່ຫຼຸດ 65,700 ຕື້ກີບ ທຽບໃສ່ທ້າຍປີ 2024 ເພີ່ມຂຶ້ນ 5.69%;
- **ໜີ້ NPL ທັງໝົດ:** ບໍ່ເກີນ 3% ຂອງຍອດເງິນກູ້ທັງໝົດ;
- **ກຳໄລສຸດທິ:** ບໍ່ຫຼຸດ 550 ຕື້ກີບ ທຽບໃສ່ຈັດຕັ້ງປະຕິບັດປີ 2024 ເພີ່ມຂຶ້ນ 22.34%
- **ແຜນຂະຫຍາຍຕາໜ່າງບໍລິການ:** ສ້າງຕັ້ງສາຂາ 01 ແຫ່ງ, ຂະຫຍາຍໜ່ວຍບໍລິການໃໝ່ 13 ແຫ່ງ ແລະ ຍົກຍ້າຍສະຖານທີ່ໜ່ວຍບໍລິການ 02 ແຫ່ງ;
- ແຜນປະກອບວັດຖຸເຕັກນິກ, ກໍ່ສ້າງ ແລະ ສ້ອມແປງ ແມ່ນຈະເນັ້ນໃສ່ສືບຕໍ່ບັນດາໂຄງການທີ່ຍັງບໍ່ສຳເລັດ, ປ່ຽນແທນສິ່ງເກົ່າທີ່ເປ່ເພ ແລະ ປະກອບເພີ່ມໃໝ່ສິ່ງທີ່ຈຳເປັນ ລວມທັງໝົດ 804.67 ຕື້ກີບ;
- ແຜນຮັບພະນັກງານໃໝ່ ຈຳນວນ 84 ຄົນ;

ປະທານກອງປະຊຸມ ໄດ້ສະເໜີໃຫ້ຜູ້ຖືຮຸ້ນມີຄຳຖາມຕໍ່ວາລະນີ້ ເຊິ່ງມີຄຳເຫັນ ແລະ ຄຳຖາມດັ່ງນີ້:

❖ **ທ່ານ ໄກອັນ ກາດາວານິດ:** ອີງຕາມຂໍ້ມູນໃນເອກະສານ ແຜນການຮັບພະນັກງານໃໝ່ປີ 2025 ຂອງ ທຄຕລ ມີຈຳນວນ 84 ຄົນ ແລະ ສ້າງຕັ້ງ 1 ສາຂາໃໝ່, ແຕ່ຕາມການອະທິບາຍຂອງຜູ້ອຳນວຍການ ໃນຈຳນວນພະນັກງານໃໝ່ 84 ຄົນແມ່ນລວມທັງການຮັບເພື່ອປ່ຽນແທນພະນັກງານທີ່ລາອອກຈຳນວນໜຶ່ງ; ການສ້າງຕັ້ງສາຂາເພີ່ມ 1 ແຫ່ງ ແມ່ນມາຈາກການຍົກລະດັບໜ່ວຍບໍລິການຂຶ້ນເປັນສາຂາ ເຊິ່ງຈະເຮັດໃຫ້ມີໜ່ວຍບໍລິການຫຼຸດລົງ 1 ແຫ່ງ ຢູ່ໃນແຜນຂະຫຍາຍໜ່ວຍບໍລິການໃໝ່ 13 ແຫ່ງ. ສະເໜີໃຫ້ມີການກວດຄືນ ແລະ ປັບປຸງເນື້ອໃນບົດລາຍງານໃຫ້ຊັດເຈນຂຶ້ນ. ນອກຈາກນີ້ ຕົວເລກແຜນການທີ່ອາດມີການດັດແກ້ ຄວນສະເໜີໃຫ້ກອງປະຊຸມ ມອບສິດຢ່າງເຕັມສ່ວນໃຫ້ ສະພາບໍລິຫານ ທຄຕລ ໃນການພິຈາລະນາຮັບຮອງ.

❖ **ທ່ານ Souvanrith Im:** ສອບຖາມກ່ຽວກັບແຜນການເພີ່ມທຶນ 800 ຕື້ກີບ ແມ່ນໄດ້ປະເມີນເຂົ້າໃນແຜນການປະຈຳປີ 2025 ແລ້ວຫຼືຍັງ?

➢ **ທ່ານ ນ ສາຍສະໝອນ ຈັນທະຈັກ,** ຜູ້ອຳນວຍການ ໄດ້ສະແດງຄວາມຂອບໃຈ ແລະ ຕອບຄຳຖາມຈາກຜູ້ຖືຮຸ້ນ:

- ຕໍ່ກັບຕົວເລກໃນບົດລາຍງານທີ່ຕິດພັນກັບຈຳນວນພະນັກງານ, ໜ່ວຍບໍລິການ ແລະ ສາຂາ ຈະໄດ້ກວດກາຄືນ ແລະ ປັບປຸງໃຫ້ຖືກຕ້ອງ;

- ການຂຶ້ນແຜນປະຈຳປີ 2025, ທຄຕລ ໄດ້ພິຈາລະນາການເພີ່ມທຶນເຂົ້າໃນແຜນປະຈຳປີແລ້ວ. ແຕ່ເນື່ອງຈາກວ່າ ການຂຶ້ນແຜນປະຈຳປີ ແມ່ນໄດ້ດຳເນີນກ່ອນໄດ້ຮັບແຈ້ງຕອບຈາກກະຊວງການເງິນ (ເບື້ອງຕົ້ນ ທຄຕລ ສະເໜີໃຫ້ກະຊວງເພີ່ມທຶນໃນມູນຄ່າ 600 ກວ່າຕື້ກີບ ແຕ່ກະຊວງການເງິນແຈ້ງຕອບການເພີ່ມທຶນປະມານ 500 ກວ່າຕື້ກີບ). ນອກຈາກນີ້, ການເພີ່ມທຶນຂອງ ທຄຕລ ທີ່ຕິດພັນການຂາຍຮຸ້ນຢູ່ທະນາຄານລາວ-ຝຣັ່ງ ແລະ ຮຸ້ນຢູ່ບໍລິສັດຜະລິດໄຟຟ້າລາວມະຫາຊົນທີ່ຢູ່ໃນວາລະທີ 9 ແລະ ວາລະທີ 10 ຕື່ມອີກ. ສະນັ້ນ, ພາຍຫລັງສຳເລັດການເພີ່ມທຶນ ລວມທັງການຂາຍຮຸ້ນທີ່ໄດ້ຕາມມູນຄ່າຕົວຈິງ ແມ່ນຈະໄດ້ມີການປັບປຸງ ແລະ ດັດແກ້ແຜນຄືນໃໝ່. ໃນການພິຈາລະນາ ປັບປຸງບາງຕົວເລກແຜນການ ທຄຕລ ຈະພິຈາລະນາບົນພື້ນຖານການຮັກສາຜົນປະໂຫຍດສູງສຸດຂອງຜູ້ຖືຮຸ້ນ;

ກອງປະຊຸມ ໄດ້ມີມະຕິຮັບຮອງດ້ວຍຄະແນນສຽງສ່ວນຫຼາຍຂອງຜູ້ຖືຮຸ້ນທີ່ເຂົ້າຮ່ວມກອງປະຊຸມດັ່ງນີ້:

- **ເຫັນດີ:** ຈຳນວນ 836,449,765 ສຽງ, ເທົ່າກັບ 100% ຂອງຈຳນວນສຽງທັງໝົດທີ່ເຂົ້າຮ່ວມກອງປະຊຸມ;
- **ບໍ່ເຫັນດີ:** ຈຳນວນ 0 ສຽງ, ເທົ່າກັບ 0% ຂອງຈຳນວນສຽງທັງໝົດທີ່ເຂົ້າຮ່ວມກອງປະຊຸມ.

**ວາລະທີ 05: ພິຈາລະນາ ແລະ ຮັບຮອງເອົາແຜນຍຸດທະສາດພັດທະນາ ທຄຕລ ໄລຍະ 2025-2029**

**ທ່ານ ນ. ສາຍສະໝອນ ຈັນທະຈັກ**, ຜູ້ອຳນວຍການ ທຄຕລ ໄດ້ສະເໜີກອງປະຊຸມ ພິຈາລະນາ ແລະ ຮັບຮອງເອົາແຜນຍຸດທະສາດພັດທະນາ ທຄຕລ ໄລຍະ 2025-2029 ເພື່ອກຳນົດບັນດາທິດທາງ, ຄາດໝາຍ ແລະ ແຜນການຈັດຕັ້ງປະຕິບັດລະອຽດ ພາຍໃຕ້ວິໄສທັດ "ເຂັ້ມແຂງ ທັນສະໄໝ ໄດ້ມາດຕະຖານສາກົນ", ໃນນັ້ນ, ໄດ້ກຳນົດ 03 ຍຸດທະສາດໃຫຍ່ ຄື:

- **ຍຸດທະສາດທີ 01:** ສ້າງຄວາມເຂັ້ມແຂງໃຫ້ອົງກອນ (ປະກອບມີ 4 ແຜນງານ 17 ໂຄງການ)
  - ບໍລິຫານການເງິນ ແລະ ເພີ່ມປະສິດທິພາບການດຳເນີນທຸລະກິດໃຫ້ເຂັ້ມແຂງ;
  - ຄຸ້ມຄອງ ແລະ ຂະຫຍາຍສິນເຊື່ອ ຢ່າງມີປະສິດທິພາບ;
  - ພັດທະນາດ້ານບຸກຄະລາກອນໃຫ້ເຂັ້ມແຂງ ແລະ ມີປະສິດທິພາບ;
  - ສ້າງພື້ນຖານການຄຸ້ມຄອງຄວາມສ່ຽງ ແລະ ສະກັດກັ້ນການຟອກເງິນ ໃຫ້ເຂັ້ມແຂງ.
- **ຍຸດທະສາດທີ 02:** ຫັນເປັນທັນສະໄໝ ແລະ ນຳໃຊ້ເຕັກໂນໂລຊີໃໝ່ໃນການດຳເນີນທຸລະກິດ (ປະກອບມີ 5 ແຜນງານ 22 ໂຄງການ)
  - ຄຸ້ມຄອງ ແລະ ພັດທະນາລະບົບໄອທີໃຫ້ທັນສະໄໝ;
  - ພັດທະນາຜະລິດຕະພັນ ເພື່ອຫັນສູ່ການບໍລິການໃນຮູບແບບ Digital Banking;
  - ຄຸ້ມຄອງບໍລິຫານຂໍ້ມູນ ແລະ ພັດທະນາວຽກງານສະຖິຕິ ໃຫ້ທັນສະໄໝ;
  - ພັດທະນາການອະນຸມັດສິນເຊື່ອຫັນເປັນທັນສະໄໝ;
  - ພັດທະນາລະບົບບັນຊີ-ລາຍງານການເງິນໃຫ້ເປັນທັນສະໄໝ.
- **ຍຸດທະສາດທີ 03:** ຫັນສູ່ມາດຕະຖານສາກົນ ໃນການຄຸ້ມຄອງການບໍລິຫານ ແລະ ບໍລິການ (ປະກອບມີ 6 ແຜນງານ 11 ໂຄງການ)
  - ຄຸ້ມຄອງ ແລະ ບໍລິຫານອົງກອນໃຫ້ຍືນຍົງຕາມທິດສີຂຽວ Sustainable Finance;

- ປະຕິບັດຕາມຫຼັກການ BASEL II;
- ພັດທະນາວຽກງານບັນຊີ ແລະ ລາຍງານການເງິນ ໃຫ້ໄດ້ຕາມມາດຕະຖານ IFRS ເຕັມຮູບແບບ;
- ພັດທະນາ ແລະ ປັບປຸງລະບົບກວດກາໃຫ້ກ້າວສູ່ມາດຕະຖານ COSO;
- ພັດທະນາວຽກງານບໍລິການໃຫ້ໄດ້ຕາມມາດຕະຖານສາກົນ *ISO9001:2015;*
- ພັດທະນາໂຄງການ PCI Compliance.

ປະທານກອງປະຊຸມ ໄດ້ສະເໜີໃຫ້ຜູ້ຖືຮຸ້ນມີຄຳຖາມຕໍ່ວາລະນີ້ ເຊິ່ງມີຄຳເຫັນ ແລະ ຄຳຖາມດັ່ງນີ້:

- ❖ **ທ່ານ ທອງລຸນ ມະນີເລີດ:** ຍຸດທະສາດພັດທະນາການບໍລິການໃຫ້ໄດ້ຕາມມາດຖານສາກົນ *ISO 9001:2015* ບໍ່ແນ່ໃຈວ່າຄວນຈະເປັນ 2025 ຫຼືບໍ່?
- ➢ **ທ່ານ ສອນນາລິນ ແສງມະນີ**: *ISO 9001:2015* ແມ່ນເປັນລະຫັດຂອງມາດຖານສາກົນດັ່ງກ່າວ ບໍ່ໄດ້ໝາຍເຖິງປີ 2025;

ກອງປະຊຸມ ໄດ້ມີມະຕິຮັບຮອງດ້ວຍຄະແນນສຽງສ່ວນຫຼາຍຂອງຜູ້ຖືຮຸ້ນທີ່ເຂົ້າຮ່ວມກອງປະຊຸມດັ່ງນີ້:

- **ເຫັນດີ:** ຈຳນວນ 836,449,765 ສຽງ, ເທົ່າກັບ 100% ຂອງຈຳນວນສຽງທັງໝົດທີ່ເຂົ້າຮ່ວມກອງປະຊຸມ;
- **ບໍ່ເຫັນດີ:** ຈຳນວນ 0 ສຽງ, ເທົ່າກັບ 0% ຂອງຈຳນວນສຽງທັງໝົດທີ່ເຂົ້າຮ່ວມກອງປະຊຸມ.

**ວາລະທີ 06: ພິຈາລະນາ ແລະ ຮັບຮອງເອົາຜູ້ກວດສອບອິດສະລະປະຈຳປີ 2025.**

**ທ່ານ ນ. ສາຍສະໝອນ ຈັນທະຈັກ**, ຜູ້ອຳນວຍການ ທຄຕລ ໄດ້ສະເໜີກອງປະຊຸມ ຕໍ່ກັບຄັດເລືອກບໍລິສັດກວດສອບ ທຄຕລ ປະຈຳປີ 2025: ການຄົ້ນຄວ້າ ແລະ ຜ່ານການປະມູນຕາມລະບຽບທີ່ກ່ຽວຂ້ອງ, ທຄຕລ ໄດ້ເລືອກເອົາບໍລິສັດ PwC ເປັນຜູ້ດຳເນີນການກວດສອບເອກະສານລາຍງານການເງິນ ປະຈຳປີ 2025 ໃນມູນຄ່າ 945,000,000 ກີບ (ມູນຄ່າຂອງປີຜ່ານມາໄດ້ນຳໃຊ້ບໍລິສັດ EY ເປັນຜູ້ກວດສອບອິດສະລະ: 945,000,000 ກີບ) ແລະ ອອກບົດລາຍງານໃຫ້ ທຄຕລ 05 ບົດຄື:

1) ບົດລາຍງານການກວດສອບເອກະສານລາຍງານການເງິນ ຕາມມາດຕະຖານລາວ (LAS);
2) ບົດລາຍງານການກວດສອບເອກະສານລາຍງານການເງິນ ຕາມມາດຕະຖານສາກົນ (IFRS special purpose);
3) ຈົດໝາຍຄຸ້ມຄອງເຖິງຜູ້ບໍລິຫານ (Management Letter);
4) ບົດລາຍງານທົບທວນຄືນຜົນການດຳເນີນງານ (Operational review report);
5) ບົດລາຍງານການທົບທວນຄືນຖານະເງິນກູ້ (Loan review report).

ປະທານກອງປະຊຸມ ໄດ້ສະເໜີໃຫ້ຜູ້ຖືຮຸ້ນມີຄຳຖາມ, ແຕ່ບໍ່ມີຄຳເຫັນ ຫຼື ຄຳຖາມໃນວາລະນີ້;

ກອງປະຊຸມ ໄດ້ມີມະຕິຮັບຮອງດ້ວຍຄະແນນສຽງສ່ວນຫຼາຍຂອງຜູ້ຖືຮຸ້ນທີ່ເຂົ້າຮ່ວມກອງປະຊຸມດັ່ງນີ້:

- **ເຫັນດີ:** ຈຳນວນ 836,449,765 ສຽງ, ເທົ່າກັບ 100% ຂອງຈຳນວນສຽງທັງໝົດທີ່ເຂົ້າຮ່ວມກອງປະຊຸມ;
- **ບໍ່ເຫັນດີ:** ຈຳນວນ 0 ສຽງ, ເທົ່າກັບ 0% ຂອງຈຳນວນສຽງທັງໝົດທີ່ເຂົ້າຮ່ວມກອງປະຊຸມ.

**ວາລະທີ 07: ພິຈາລະນາ ແລະ ຮັບຮອງ ການແຕ່ງຕັ້ງ ປະທານ ແລະ ສະມາຊິກສະພາບໍລິຫານ ທຄຕລ ປ່ຽນແທນທ່ານສະມາຊິກເດີມທີ່ພົ້ນຈາກໜ້າທີ່ ແລະ ຮັບຮອງອາຍຸການຂອງສະພາບໍລິຫານ**

**ທ່ານ ນ. ສາຍສະໝອນ ຈັນທະຈັກ**, ຜູ້ອຳນວຍການ ທຄຕລ ໄດ້ສະເໜີກອງປະຊຸມ ພິຈາລະນາ ຮັບຮອງການແຕ່ງຕັ້ງ **ທ່ານ ສຸລິວັດ ສຸວັນນະຈູມຄຳ** ເປັນປະທານ ສະພາບໍລິຫານ ທຄຕລ, ເພື່ອປ່ຽນແທນ **ທ່ານ ບຸນປອນ ວັນນະຈິດ** ທີ່ໄດ້ເຂົ້າຮັບບຳນານ ແລະ ຮັບຮອງການແຕ່ງຕັ້ງ **ທ່ານ Arnaud DELAUNAY** ເປັນກຳມະການ ສະພາບໍລິຫານ ທຄຕລ ເພື່ອປ່ຽນແທນ **ທ່ານ Stephane MANGIAVACCA** ເຊິ່ງເຮັດໃຫ້ ສະມາຊິກສະພາບໍລິຫານ ທຄຕລ ຊຸດໃໝ່ນີ້ປະກອບມີ **08 ທ່ານ** ດັ່ງລາຍຊື່ດັ່ງລຸ່ມນີ້:

| | | |
|---|---|---|
| 1. | ທ່ານ ສຸລິວັດ ສຸວັນນະຈູມຄຳ | ຮອງລັດຖະມົນຕີກະຊວງການເງິນ, ປະທານສະພາບໍລິຫານ |
| 2. | ທ່ານ ປອ. ອາຄົມ ປຣະເສີດ | ກຳມະການອິດສະລະ, ຮອງປະທານສະພາບໍລິຫານ |
| 3. | ທ່ານ ນ. ສາຍສະໝອນ ຈັນທະຈັກ | ຜູ້ອຳນວຍການ ທຄຕລ, ກຳມະການ |
| 4. | ທ່ານ ປະສົມເພັດ ຄຳຕັນ | ກຳມະການ |
| 5. | ທ່ານ Arnaud DELAUNAY | ຕົວແທນຄູ່ຮ່ວມຍຸດທະສາດ, ກຳມະການ |
| 6. | ທ່ານ ຣສ. ທອງເພັດ ຈັນທະນີວົງ | ກຳມະການອິດສະລະ, ກຳມະການ |
| 7. | ທ່ານ ນ. ລັດດາວັນ ຊຶງວິໄລ | ກຳມະການອິດສະລະ, ກຳມະການ |
| 8. | ທ່ານ ສອນໄຊ ສີລາເພັດ | ກຳມະການອິດສະລະ, ກຳມະການ |

ສະພາບໍລິຫານຊຸດນີ້ ມີອາຍຸການ **01** ປີ ນັບຈາກກອງປະຊຸມຜູ້ຖືຮຸ້ນຄັ້ງນີ້ເປັນຕົ້ນໄປ.

ປະທານກອງປະຊຸມ ໄດ້ສະເໜີໃຫ້ຜູ້ຖືຮຸ້ນມີຄຳຖາມ, ແຕ່ບໍ່ມີຄຳເຫັນ ຫຼື ຄຳຖາມໃນວາລະນີ້;

- **ເຫັນດີ:** ຈຳນວນ 836,449,765 ສຽງ, ເທົ່າກັບ 100% ຂອງຈຳນວນສຽງທັງໝົດທີ່ເຂົ້າຮ່ວມກອງປະຊຸມ;
- **ບໍ່ເຫັນດີ:** ຈຳນວນ 0 ສຽງ, ເທົ່າກັບ 0% ຂອງຈຳນວນສຽງທັງໝົດທີ່ເຂົ້າຮ່ວມກອງປະຊຸມ.

**ວາລະທີ 08: ພິຈາລະນາ ແລະ ຮັບຮອງ ການເພີ່ມທຶນຈົດທະບຽນຂອງ ທຄຕລ**

**ທ່ານ ນ. ສາຍສະໝອນ ຈັນທະຈັກ**, ຜູ້ອຳນວຍການ ທຄຕລ ໄດ້ສະເໜີກອງປະຊຸມ ພິຈາລະນາ ຮັບຮອງການເພີ່ມທຶນຈົດທະບຽນຂອງ ທຄຕລ: ອີງຕາມການຂະຫຍາຍຕົວຂອງທຸລະກິດຂອງ ທຄຕລ ຢ່າງຕໍ່ເນື່ອງ ເຮັດໃຫ້ອັດຕາສ່ວນຄວາມພຽງພໍຂອງທຶນ ທຄຕລ ໃນປະຈຸບັນແມ່ນ 6.00% (IFRS) ອີງຕາມຕົວເລກໃນເດືອນ 12/2024 ເຊິ່ງຫຼຸດມາດຕະຖານທີ່ທະນາຄານແຫ່ງ ສປປ ລາວ ວາງໄວ້ຄື 8%. ສະນັ້ນ ຈຶ່ງມີຄວາມຈຳເປັນໃນການ ເພີ່ມທຶນຈົດທະບຽນຂອງ ທຄຕລ ເພື່ອຮັບປະກັນຄວາມໝັ້ນຄົງ ແລະ ຄວາມເຊື່ອໝັ້ນຕໍ່ ທຄຕລ.

ສະເໜີກອງປະຊຸມພິຈາລະນາຮັບຮອງແຜນການເພີ່ມທຶນຂອງ ທຄຕລ ບໍ່ຕ່ຳກວ່າ 800 ຕື້ກີບ, ອະນຸມັດໃຫ້ ທຄຕລ ດຳເນີນຂັ້ນຕອນຕ່າງໆທີ່ຈຳເປັນເພື່ອໃຫ້ອັດຕາສ່ວນຄວາມພຽງພໍຂອງທຶນ ທຄຕລ ເພີ່ມຂຶ້ນຕາມ ມາດຕະຖານຄວາມພໍພຽງຂອງທຶນຂັ້ນຕ່ຳສຸດທີ່ທະນາຄານແຫ່ງ ສປປ ລາວ ວາງອອກ ແລະ ມອບໝາຍໃຫ້ສະພາ ບໍລິຫານພິຈາລະນາຮັບຮອງທຸກບັນຫາທີ່ຈຳເປັນຕ່າງໆ ທີ່ຕິດພັນກັບການດຳເນີນການເພີ່ມທຶນຈົດທະບຽນໃຫ້ ສຳເລັດ ແລ້ວລາຍງານໃຫ້ຜູ້ຖືຮຸ້ນຮັບຊາບໃນກອງປະຊຸມຄັ້ງຕໍ່ໄປ.

ປະທານກອງປະຊຸມ ໄດ້ສະເໜີໃຫ້ຜູ້ຖືຮຸ້ນມີຄຳຖາມຕໍ່ວາລະນີ້ ເຊິ່ງມີຄຳເຫັນ ແລະ ຄຳຖາມດັ່ງນີ້:

❖ **ທ່ານ ໄກອັນ ກາດາອານິດ:** ໃນວາລະນີ້ລະບຸວ່າ ມະຕິຈະມີຜົນອະນຸມັດໃຫ້ ທຄຕລ ດຳເນີນຕາມຂັ້ນຕອນຕ່າງໆທີ່ຈຳເປັນ ເພື່ອໃຫ້ການເພີ່ມທຶນສຳເລັດລວມເຖິງ ມອບໃຫ້ສະພາບໍລິຫານມີອຳນາດໃນການອະນຸມັດ. ສະນັ້ນ, ສະເໜີທີ່ປະຊຸມໃຫ້ເພີ່ມສິດ ແລະ ອຳນາດໃຫ້ສະພາບໍລິຫານຕື່ມໃນການປັບປຸງ ແລະ ດັດແກ້ຕົວເລກແຜນການປີ 2025 ຕາມການນຳສະເໜີໃນວາລະທີ 4 ເນື່ອງຈາກວ່າ ອຳນາດການອະນຸມັດຂອງສະພາບໍລິຫານມີຂອບເຂດທຳອິດຕາມເອກະສານເຊີນປະຊຸມສະເພາະໃນວາລະທີ 09 ແລະ ວາລະທີ 10 ເທົ່ານັ້ນ.

- ເອກະສານສະບັບພາສາອັງກິດສຳລັບວາລະນີ້ ສະເໜີໃຫ້ມີການປັບປຸງຄຳສັບໃຫ້ແທດເໝາະ ແລະ ຊັດເຈນຕື່ມ. ເພາະໃນຕົວຈິງອາດຈະມີເອກະສານຫຼາຍຢ່າງບາງອັນຕ້ອງມີການປະຕິເສດບັນຫາໃດໜຶ່ງ ເພື່ອໃຫ້ການແກ້ໄຂບັນຫາສຳເລັດ. ຄວນສະເໜີມອບອຳນາດຂາດຕົວໃຫ້ສະພາບໍລິຫານ.

❖ **ທ່ານ Souvanrith Im:** ການເພີ່ມທຶນຂອງ ທຄຕລ ເຫັນວ່າມາຈາກຫຼາຍພາກສ່ວນເປັນຕົ້ນແມ່ນກະຊວງການເງິນ, ຄູ່ຮ່ວມຍຸດທະສາດ ແລະ ຜູ້ຖືຮຸ້ນທົ່ວໄປໃນຕະຫຼາດຫຼັກຊັບລາວ. ທຄຕລ ໄດ້ວາງກຳນົດໄລຍະເວລາການປະຕິບັດວຽກງານ ແລະ ຄາດໝາຍສຳເລັດໃນໄລຍະໃດ?

➢ **ທ່ານ ນ ສາຍສະໝອນ ຈັນທະຈັກ**, ຜູ້ອຳນວຍການ ທຄຕລ: ເຫັນດີຕາມຄຳເຫັນຂອງ **ທ່ານ ໄກອັນ ກາດາອານິດ**; ການສະເໜີຂອງ ທຄຕລ ຕໍ່ກອງປະຊຸມຜູ້ຖືຮຸ້ນ ກໍ່ແມ່ນຂໍສິດໃຫ້ສະພາບໍລິຫານໃນການດຳເນີນການ ແລະ ຕັດສິນບັນຫາຕ່າງໆ;

- ຕໍ່ກັບແຜນການເພີ່ມທຶນຂອງ ທຄຕລ ພາຍຫລັງມີມະຕິກອງປະຊຸມຜູ້ຖືຮຸ້ນນີ້ແລ້ວ, ທຄຕລ ຈະດຳເນີນການປະສານງານກັບພາກສ່ວນທີ່ກ່ຽວຂ້ອງ ເພື່ອໃຫ້ການເພີ່ມທຶນໃນຄັ້ງນີ້ສອດຄ່ອງຕາມກຳນົດເວລາທີ່ວາງໄວ້ເຊິ່ງຄາດວ່າຈະໃຫ້ສຳເລັດໃນໄຕມາດ 3/2025;

ກອງປະຊຸມ ໄດ້ມີມະຕິຮັບຮອງດ້ວຍຄະແນນສຽງສ່ວນຫຼາຍຂອງຜູ້ຖືຮຸ້ນທີ່ເຂົ້າຮ່ວມກອງປະຊຸມດັ່ງນີ້:

- **ເຫັນດີ:** ຈຳນວນ 836,379,765 ສຽງ, ທຽບເທົ່າກັບ 3/3 ຂອງຈຳນວນສຽງທັງໝົດທີ່ເຂົ້າຮ່ວມກອງປະຊຸມ ແລະ ເທົ່າກັບ 80.528% ຂອງຈຳນວນຮຸ້ນ ທຄຕລ ທັງໝົດ;
- **ບໍ່ເຫັນດີ:** ຈຳນວນ 70,000 ສຽງ, ທຽບເທົ່າກັບ 0/3 ຂອງຈຳນວນສຽງທັງໝົດທີ່ເຂົ້າຮ່ວມກອງປະຊຸມ ແລະ ທຽບເທົ່າກັບ 0.007% ຂອງຈຳນວນຮຸ້ນ ທຄຕລ ທັງໝົດ.

## ວາລະທີ 09: ພິຈາລະນາ ແລະ ຮັບຮອງ ການຂາຍຮຸ້ນທີ່ ທຄຕລ ຖືຄອງຢູ່ທະນາຄານລາວ-ຝຣັ່ງ ຈຳກັດ

**ທ່ານ ນ. ສາຍສະໝອນ ຈັນທະຈັກ**, ຜູ້ອຳນວຍການ ທຄຕລ ໄດ້ສະເໜີກອງປະຊຸມ ພິຈາລະນາຮັບຮອງການຂາຍຮຸ້ນທີ່ ທຄຕລ ຖືຄອງຢູ່ທະນາຄານລາວ-ຝລັ່ງຈຳກັດ: ເນື່ອງຈາກປະຈຸບັນອັດຕາຄວາມພຽງພໍຂອງທຶນຂອງ ທຄຕລ ຍັງຫຼຸດມາດຕະຖານທີ່ທະນາຄານແຫ່ງ ສປປ ລາວ ວາງອອກ ໃນຂະນະດຽວກັນທຸລະກິດຂອງ ທຄຕລ ກໍ່ມີການຂະຫຍາຍຕົວຢ່າງຕໍ່ເນື່ອງ ດັ່ງທີ່ໄດ້ລາຍງານໄວ້ໃນວາລະຂ້າງເທິງ. ທຄຕລ ຈຶ່ງເຫັນສົມຄວນຖອນເອົາທຶນຮອນທີ່ໄດ້ລົງທຶນຢູ່ໃນບາງບໍລິສັດ ເພື່ອມານຳໃຊ້ໃນການທຸລະກິດຕົ້ນຕໍຢູ່ ທຄຕລ ໃຫ້ມີປະສິດທິຜົນສູງຂຶ້ນຕື່ມ ແລະ ເພື່ອຈຳກັດຂອບເຂດການລົງທຶນຂອງ ທຄຕລ ບໍ່ໃຫ້ກວ້າງຂວາງເກີນໄປ, ຫຼີກລ່ຽງການລົງທຶນໃນກິດຈະການທີ່ອາດຈະກໍ່ໃຫ້ເກີດຂໍ້ຂັດແຍ່ງດ້ານຜົນປະໂຫຍດ. ທຄຕລ ຈຶ່ງເຫັນສົມຄວນສະເໜີຂາຍຮຸ້ນທັງໝົດທີ່

ທຄຕລ ຖືຄອງຢູ່ໃນທະນາຄານລາວ-ຝຣັ່ງ ຈຳກັດ ຈຳນວນ 30%. ສຳລັບລາຍລະອຽດ ກ່ຽວກັບລາຄາຂາຍ ຍັງຈະຕ້ອງໄດ້ມີການຄົ້ນຄວ້າ ແລະ ເຈລະຈາໃນລາຍລະອຽດກັບຜູ້ທີ່ສົນໃຈຊື້ ບົນພື້ນຖານການຄຳນຶງເຖິງຜົນປະໂຫຍດສູງສຸດຂອງຜູ້ຖືຮຸ້ນ ທຄຕລ. ປະຈຸບັນນີ້, ໄດ້ມີບໍລິສັດສະແດງເຈດຈຳນົງຊື້ເອົາຮຸ້ນດັ່ງກ່າວແລ້ວ.

ສະເໜີກອງປະຊຸມພິຈາລະນາອະນຸມັດໃຫ້ ທຄຕລ ດຳເນີນຂັ້ນຕອນທີ່ຈຳເປັນ ເພື່ອເຮັດສຳເລັດການຂາຍຮຸ້ນທັງໝົດທີ່ ທຄຕລ ຖືຄອງຢູ່ທະນາຄານລາວ-ຝຣັ່ງຈຳກັດ ໂດຍມອບໝາຍໃຫ້ສະພາບໍລິຫານ ພິຈາລະນາຮັບຮອງທຸກບັນຫາທີ່ຈຳເປັນຕ່າງໆ ທີ່ຕິດພັນກັບການຂາຍຮຸ້ນດັ່ງກ່າວໃຫ້ສຳເລັດ ແລ້ວລາຍງານໃຫ້ຜູ້ຖືຮຸ້ນຮັບຊາບໃນກອງປະຊຸມຄັ້ງຕໍ່ໄປ.

ປະທານກອງປະຊຸມ ໄດ້ສະເໜີໃຫ້ຜູ້ຖືຮຸ້ນມີຄຳຖາມຕໍ່ວາລະນີ້ ເຊິ່ງມີຄຳເຫັນ ແລະ ຄຳຖາມດັ່ງນີ້:

- ❖ **ທ່ານ ໄກອັນ ພາດາອານິດ:** ສະເໜີໃຫ້ປັບປຸງບາງຄຳສັບໃນເອກະສານລາຍງານສະບັບພາສາອັງກິດຂອງວາລະນີ້ໃຫ້ສອດຄ່ອງຂຶ້ນຕື່ມຕາມທີ່ໄດ້ກ່າວໄວ້ໃນວາລະທີ 08.

ກອງປະຊຸມ ໄດ້ມີມະຕິຮັບຮອງດ້ວຍຄະແນນສຽງສ່ວນຫຼາຍຂອງຜູ້ຖືຮຸ້ນທີ່ເຂົ້າຮ່ວມກອງປະຊຸມດັ່ງນີ້:

- **ເຫັນດີ:** ຈຳນວນ: 836,419,765 ສຽງ, ທຽບເທົ່າກັບ 3/3 ຂອງຈຳນວນສຽງທັງໝົດທີ່ເຂົ້າຮ່ວມກອງປະຊຸມ ແລະ ເທົ່າກັບ 80.532% ຂອງຈຳນວນຮຸ້ນ ທຄຕລ ທັງໝົດ;
- **ບໍ່ເຫັນດີ:** ຈຳນວນ 30,000 ສຽງ, ທຽບເທົ່າກັບ 0/3 ຂອງຈຳນວນສຽງທັງໝົດທີ່ເຂົ້າຮ່ວມກອງປະຊຸມ ແລະ ທຽບເທົ່າກັບ 0.003 % ຂອງຈຳນວນຮຸ້ນ ທຄຕລ ທັງໝົດ.

## ວາລະທີ 10: ພິຈາລະນາ ແລະ ຮັບຮອງ ການຂາຍຮຸ້ນທີ່ ທຄຕລ ຖືຄອງຢູ່ບໍລິສັດຜະລິດໄຟຟ້າ ລາວ ມະຫາຊົນ

**ທ່ານ ນ. ສາຍສະໝອນ ຈັນທະຈັກ**, ຜູ້ອຳນວຍການ ທຄຕລ ໄດ້ສະເໜີກອງປະຊຸມ ພິຈາລະນາຮັບຮອງການຂາຍຮຸ້ນ ທີ່ ທຄຕລ ຖືຄອງຢູ່ບໍລິສັດຜະລິດໄຟຟ້າລາວ ມະຫາຊົນ: ອີງຕາມແຜນການຖອນເອົາທຶນທີ່ ທຄຕລ ໄດ້ລົງທຶນຢູ່ໃນບາງບໍລິສັດ ເພື່ອມານຳໃຊ້ໃນການທຸລະກິດຕົ້ນຕໍ ແລະ ເພື່ອຈຳກັດຂອບເຂດການລົງທຶນ ບໍ່ໃຫ້ກວ້າງຂວາງເກີນໄປ, ທຄຕລ ຈຶ່ງເຫັນສົມຄວນສະເໜີຂາຍຮຸ້ນທັງໝົດທີ່ ທຄຕລ ຖືຄອງຢູ່ໃນບໍລິສັດຜະລິດໄຟຟ້າລາວ ມະຫາຊົນ ຈຳນວນ **38,350,000** ຮຸ້ນ. ສຳລັບລາຍລະອຽດ ກ່ຽວກັບ ລາຄາຂາຍ ຍັງຈະຕ້ອງໄດ້ມີການຄົ້ນຄວ້າ ແລະ ເຈລະຈາໃນລາຍລະອຽດກັບຜູ້ທີ່ສົນໃຈຊື້ ບົນພື້ນຖານການຄຳນຶງເຖິງຜົນປະໂຫຍດສູງສຸດຂອງຜູ້ຖືຮຸ້ນ ທຄຕລ. ປະຈຸບັນນີ້ ໄດ້ມີບໍລິສັດ ໄດ້ແຈ້ງເຈດຈຳນົງຂໍຊື້ເອົາຮຸ້ນດັ່ງກ່າວແລ້ວ.

ສະເໜີກອງປະຊຸມພິຈາລະນາອະນຸມັດໃຫ້ ທຄຕລ ດຳເນີນຂັ້ນຕອນທີ່ຈຳເປັນ ເພື່ອເຮັດສຳເລັດການຂາຍຮຸ້ນທັງໝົດທີ່ ທຄຕລ ຖືຄອງຢູ່ບໍລິສັດຜະລິດໄຟຟ້າລາວ ມະຫາຊົນ ໂດຍມອບໝາຍໃຫ້ສະພາບໍລິຫານ ພິຈາລະນາຮັບຮອງທຸກບັນຫາທີ່ຈຳເປັນຕ່າງໆ ທີ່ຕິດພັນກັບການຂາຍຮຸ້ນດັ່ງກ່າວໃຫ້ສຳເລັດ ແລ້ວລາຍງານໃຫ້ຜູ້ຖືຮຸ້ນຮັບຊາບໃນກອງປະຊຸມຄັ້ງຕໍ່ໄປ.

ປະທານກອງປະຊຸມ ໄດ້ສະເໜີໃຫ້ຜູ້ຖືຮຸ້ນມີຄຳຖາມ ເຊິ່ງບໍ່ມີໃຜອອກຄຳເຫັນຫຼືຄຳຖາມໃນວາລະນີ້;

ກອງປະຊຸມ ໄດ້ມີມະຕິຮັບຮອງດ້ວຍຄະແນນສຽງສ່ວນຫຼາຍຂອງຜູ້ຖືຮຸ້ນທີ່ເຂົ້າຮ່ວມກອງປະຊຸມດັ່ງນີ້:

- **ເຫັນດີ:** ຈຳນວນ 836,327,065 ສຽງ, ທຽບເທົ່າກັບ 3/3 ຂອງຈຳນວນສຽງທັງໝົດທີ່ເຂົ້າຮ່ວມກອງປະຊຸມ ແລະ ເທົ່າກັບ 80.523 % ຂອງຈຳນວນຮຸ້ນ ທຄຕລ ທັງໝົດ;

- **ບໍ່ເຫັນດີ:** ຈຳນວນ 122,700 ສຽງ, ທຽບເທົ່າກັບ 0/3 ຂອງຈຳນວນສຽງທັງໝົດທີ່ເຂົ້າຮ່ວມກອງປະຊຸມ ແລະ ທຽບເທົ່າກັບ 0.012 % ຂອງຈຳນວນຮຸ້ນ ທຄຕລ ທັງໝົດ.

**ຫຼັງຈາກກອງປະຊຸມໄດ້ດຳເນີນຄົບຖ້ວນທຸກວາລະແລ້ວ, ປະທານກອງປະຊຸມ ໄດ້ເປີດໂອກາດໃຫ້ຜູ້ເຂົ້າຮ່ວມກອງປະຊຸມ ມີຄຳເຫັນ ຫຼື ຄຳຖາມເພີ່ມເຕີມ ເຊິ່ງມີບາງຄຳເຫັນເພີ່ມເຕີມດັ່ງນີ້:**

- ❖ ***ທ່ານ ໄກວັນ ກາດາວານິດ:*** ກອງປະຊຸມຄັ້ງຜ່ານມາໄດ້ເວົ້າເຖິງລະບຽບການນຳໃຊ້ເຄື່ອງໝາຍຂັ້ນຫົວໜ່ວຍຫຼັກພັນ (ຈຸດ/ຈ້ຳ) ເຫັນວ່າ ຍັງມີພະນັກງານ ທຄຕລ ບາງຄົນຍັງນຳໃຊ້ແບບເກົ່າຢູ່ ເຊິ່ງໃນຕົວຈິງໂທລະສັບມືຖືບາງລຸ້ນ ກໍ່ຍັງບໍ່ມີການອັບເດດ ເຮັດໃຫ້ຜູ້ໃຊ້ງານຍັງຢູ່ໃນຄວາມລຶ້ງເຄີຍແບບເກົ່າເຊິ່ງໄດ້ປະກາດປ່ຽນແປງໃຫ້ເປັນຄືກັບສາກົນແລ້ວ.
- ➢ ***ທ່ານ ນ ສາຍສະໝອນ ຈັນທະຈັກ,*** ຜູ້ອຳນວຍການ ທຄຕລ: ການອັບເດດລະບົບເທິງມືຖື ອາດຈະຂຶ້ນກັບແຕ່ລະບຸກຄົນ ແຕ່ລະຍີ່ຫໍ້, ແຕ່ໃນດ້ານຫຼັກການບັນຊີ ທຄຕລ ໄດ້ປັບປຸງແລ້ວ, ທຄຕລ ຂໍຮັບເອົາຄຳເຫັນເພື່ອນຳໄປຄົ້ນຄວ້າປັບປຸງ.
- ❖ ***ທ່ານ ສຸລິວັດ ສຸວັນນະຈູມຄຳ, ຮອງລັດຖະມົນຕີກະຊວງການເງິນ, ໃນນາມປະທານສະພາບໍລິຫານຄົນໃໝ່ຂອງ ທຄຕລ ໄດ້ມີຄຳເຫັນຕໍ່ກອງປະຊຸມຜູ້ຖືຮຸ້ນ:***
- ໄດ້ສະແດງຄວາມຂອບໃຈຕໍ່ກັບຜູ້ຖືຮຸ້ນທີ່ ໃຫ້ຄວາມເຊື່ອໝັ້ນ ແລະ ຮັບຮອງເອົາຕົນເອງເປັນປະທານສະພາບໍລິຫານ ທຄຕລ ເຊິ່ງເປັນທະນາຄານທີ່ມີບົດບາດສຳຄັນໃນການພັດທະນາເສດຖະກິດຂອງ ສປປ ລາວ, ເປັນທະນາຄານຈົດທະບຽນໃນຕະຫຼາດຫຼັກຊັບລາວ, ດຳເນີນທຸລະກິດ ແມ່ນແນໃສ່ຜົນປະໂຫຍດສູງສຸດຂອງຜູ້ຖືຮຸ້ນ;
- ໃນນາມຕາງໜ້າສະພາບໍລິຫານຂອງ ທຄຕລ ຂໍຢັ້ງຢືນຕໍ່ຜູ້ຖືຮຸ້ນວ່າ: ຄະນະສະພາບໍລິຫານຈະພາຍາຍາມບຸກບືນນຳພາ ທຄຕລ ໃຫ້ສືບຕໍ່ໃນການພັດທະນາຢ່າງມີປະສິດທິຜົນສູງ, ຈະປະຕິບັດຕາມແຜນຍຸດທະສາດໃຫ້ໄດ້ຕາມຄາດໝາຍທີ່ຕັ້ງໄວ້; ແລະ ຂໍຄວາມເຊື່ອໝັ້ນຈາກຜູ້ຖືຮຸ້ນ ໃຫ້ສືບຕໍ່ນຳໃຊ້ບໍລິການ ແລະ ໃຫ້ການສະໜັບສະໜູນ ທຄຕລ ຕໍ່ໄປ.

ປະທານກອງປະຊຸມ ໄດ້ກ່າວສະແດງຄວາມຂອບໃຈຜູ້ຖືຮຸ້ນ ແລະ ຕາງໜ້າຜູ້ຖືຮຸ້ນ ທີ່ໄດ້ໃຫ້ກຽດເຂົ້າຮ່ວມກອງປະຊຸມ ແລະ ໄດ້ປະກາດປິດກອງປະຊຸມໃນເວລາ 16:20 ໂມງ ຂອງວັນດຽວກັນ.

**ປະທານກອງປະຊຸມ** | **ຜູ້ບັນທຶກ**

ປອ. ອາຄົມ ປຣະເສີດ | ສອນນາລິນ ແສງມະນີ

**(ເອກະສານຄັດຕິດ 03)**

# ແຜນດຳເນີນທຸລະກິດປະຈຳປີ 2025 ຂອງ ທຄຕລ (ດັດແກ້)

ໃນໄລຍະຜ່ານມາ ການດຳເນີນທຸລະກິດ ຂອງ ທຄຕລ ໄດ້ມີການເຕີບໃຫຍ່ຂະຫຍາຍຕົວຫຼາຍດ້ານ, ຂະໜາດຂອງຊັບສິນໄດ້ມີການຂະຫຍາຍຕົວແບບກ້າວກະໂດດ ແລະ ເພີ່ມຂຶ້ນຢ່າງໄວວາ, ໃນຂະນະທີ່ດ້ານທຶນເພີ່ມຂຶ້ນໃນຈັງຫວະທີ່ຊ້າກວ່າ ເຮັດໃຫ້ລະດັບຄວາມພຽງພໍຂອງທຶນຕໍ່າກວ່າເກນມາດຖານທີ່ກຳນົດໄວ້. ສະນັ້ນ, ເພື່ອແກ້ໄຂບັນຫາດັ່ງກ່າວ ທຄຕລ ໄດ້ມີການດຳເນີນການເພີ່ມທຶນຈົດທະບຽນ ພ້ອມທັງຄົ້ນຄວ້າຂາຍຮຸ້ນທີ່ ທຄຕລ ຖືຄອງຢູ່ທະນາຄານລາວ-ຝຣັ່ງ ແລະ ບໍລິສັດຜະລິດໄຟຟ້າລາວ ມະຫາຊົນ ຕາມມະຕິກອງປະຊຸມສາມັນຜູ້ຖືຮຸ້ນ ທຄຕລ ປະຈຳປີ 2024 ຄັ້ງວັນທີ 30 ເມສາ 2025 ທີ່ຜ່ານມາ ທັງນີ້, ກໍ່ເພື່ອປັບປຸງອັດຕາສ່ວນຄວາມພຽງພໍທຶນໃຫ້ດີຂຶ້ນ ເຊິ່ງຈາກການດຳເນີນຂະບວນການດັ່ງກ່າວຈະກະທົບຕໍ່ການປ່ຽນແປງຕົວເລກຖານະການເງິນຂອງທະນາຄານໃນປັດຈຸບັນ. ນອກຈາກນັ້ນ, ຜ່ານການຈັດຕັ້ງປະຕິບັດແຜນດຳເນີນທຸລະກິດໃນໄລຍະຕົ້ນປີ 2025 ທີ່ຜ່ານມາ ເຫັນວ່າສະພາບການດຳເນີນທຸລະກິດມີການປັບຕົວດີຂຶ້ນ ຕົວເລກບາງດ້ານກໍ່ໃກ້ຈະເກີນແຜນ ແລະ ບາງດ້ານກໍ່ຍັງບໍ່ໄປຕາມແຜນທີ່ກຳນົດໄວ້. ສະນັ້ນ, ເພື່ອເຮັດໃຫ້ແຜນທຸລະກິດ ປະຈຳປີ 2025 ມີຄວາມສອດຄ່ອງກັບການເພີ່ມທຶນຈົດທະບຽນໃໝ່ ແລະ ໃກ້ຄຽງກັບການຈັດຕັ້ງປະຕິບັດຕົວຈິງ ຈຶ່ງມີຄວາມຈຳເປັນປັບປຸງແຜນທຸລະກິດ ແລະ ແຜນທີ່ກ່ຽວຂ້ອງຄືນໃໝ່, ດັ່ງລາຍລະອຽດລຸ່ມນີ້:

## I. ດັດແກ້ແຜນຖານະການເງິນ ແລະ ລາຍຮັບ-ລາຍຈ່າຍ:

1. **ຍອດຊັບສິນ**: ແຜນເດີມບໍ່ຫຼຸດ 150,620 ຕື້ກີບ ສະເໜີດັດແກ້ໃໝ່ ເປັນບໍ່ຫຼຸດ 157,000 ຕື້ກີບ ທຽບໃສ່ປະຕິບັດປີ 2024 ເພີ່ມຂຶ້ນ 10.41%;
2. **ຍອດເງິນຝາກ:** ແຜນເດີມບໍ່ຫຼຸດ 138,000 ຕື້ກີບ ສະເໜີດັດແກ້ໃໝ່ ເປັນບໍ່ຫຼຸດ 145,000 ຕື້ກີບ ທຽບໃສ່ປະຕິບັດປີ 2024 ເພີ່ມຂຶ້ນ 8.91%;
3. **ຍອດສິນເຊື່ອທັງໝົດ:** ຮັກສາຕົວເລກຕາມແຜນເດີມບໍ່ຫຼຸດ ຈຳນວນ 65,700 ຕື້ກີບ ທຽບໃສ່ປະຕິບັດປີ 2024 ເພີ່ມຂຶ້ນ 5.69%;
4. **ໜີ້ NPL:** ຮັກສາຕົວເລກຕາມແຜນເດີມ ບໍ່ເກີນ 3% ຂອງຍອດສິນເຊື່ອທັງໝົດ;
5. **ກຳໄລສຸດທິ:** ແຜນເດີມບໍ່ຫຼຸດ 550 ຕື້ກີບ ສະເໜີດັດແກ້ໃໝ່ເປັນບໍ່ຫຼຸດ **576** ຕື້ກີບ ທຽບໃສ່ປະຕິບັດປີ 2024 ເພີ່ມຂຶ້ນ 28.12%.

## II. ດັດແກ້ແຜນປະກອບວັດຖຸເຕັກນິກ, ກໍ່ສ້າງ ແລະ ສ້ອມແປງ

ເພື່ອຮອງຮັບແຜນການພັດທະນາລະບົບໄອທີ ຂອງ ທຄຕລ ໃຫ້ມີຄວາມທັນສະໄໝ ແລະ ປອດໄພຈາກສະພາບການພັດທະນາຂອງເທັກໂນໂລຊີ ແລະ ໄພຄຸກຄາມທາງໄຊເບີຕ່າງໆ ໃນປະຈຸບັນ ແລະ ອານາຄົດ, ທຄຕລ ໄດ້ມີການຄົ້ນຄວ້າ ແລະ ນຳສະເໜີຕໍ່ສະພາບໍລິຫານ ທຄຕລ ໃນການປັບປຸງແຜນປະກອບວັດຖຸເຕັກນິກ, ກໍ່ສ້າງ ແລະ ສ້ອມແປງ ປະຈຳປີ 2025 ຈາກແຜນເດີມທີ່ກອງປະຊຸມສາມັນຜູ້ຖືຮຸ້ນ ທຄຕລ ປະຈຳປີ 2024 ໄດ້ຮັບຮອງມາກ່ອນໜ້ານີ້ຈຳນວນ 804.67 ຕື້ກີບ ມາເປັນ 832.54 ຕື້ກີບ ເພີ່ມຂຶ້ນຈຳນວນ 27.87 ຕື້ກີບ ເພື່ອປະກອບເຂົ້າໃນໜ້າວຽກຫຼັກຄື: ວຽກ Artificial Intelligence (AI), AI Face Recognition ແລະ Cyber Security. ເຊິ່ງການປັບປຸງແຜນເພີ່ມຂຶ້ນຄັ້ງນີ້ແມ່ນຍັງຢູ່ໃນກອບຂອງແຫຼ່ງທຶນທີ່ສາມາດນຳໃຊ້ໄດ້ພາຍໃນປີ 2025.

*ເອກະສານຄັດຕິດ/Attachment 04*



# ທ່ານ ນ. ບຸນຕາ ດາຣາວົ

ຮອງປະທານສະພາບໍລິຫານ

ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ

---

| | |
|---|---|
| **ວັນ/ເດືອນ/ປີເກີດ:** | 07/12/1957 |
| **ອາຍຸ:** | 68 ປີ |
| **ສັນຊາດ:** | ລາວ |
| **ທີ່ຢູ່ປັດຈຸບັນ:** | ບ້ານ ດອນນົກຂຸ້ມ, ເມືອງ ສີສັດຕະນາກ , ນະຄອນຫຼວງວຽງຈັນ |
| **ລະດັບວິຊາສະເພາະສູງສຸດ:** | ປະລິນຍາໂທ ບໍລິຫານທຸລະກິດ ໂຄງການຮ່ວມມືລາວ-ຫວຽດນາມ |
| **ດ້ານພາສາຕ່າງປະເທດ:** | ພາສາຫວຽດນາມ, ພາສາອັງກິດ |

**ການເຝິກອົບຮົມ:** ຫຼັກສູດການເມືອງ-ການປົກຄອງ ຊັ້ນສູງ ລະບົບ 5 ເດືອນ ຮຸ່ນທີ IV ປີ 2008-2009 ທີ່ສະຖາບັນການເມືອງ-ການປົກຄອງແຫ່ງຊາດ

**ປະສົບການໃນການເຮັດວຽກ:**

| | |
|---|---|
| 06/2016-ປັດຈຸບັນ: | ພະນັກງານບໍານານ ທະນາຄານແຫ່ງ ສປປ ລາວ; |
| 08/2012-06/2016: | ຫົວໜ້າກົມຈັດຕັ້ງແລະພະນັກງານ ທະນາຄານແຫ່ງ ສປປ ລາວ; |
| 04/2011-08/2012: | ຫົວໜ້າກົມກວດກາພາຍໃນ ທະນາຄານແຫ່ງ ສປປ ລາວ; |
| 01/2008-04/2011: | ຜູ້ອໍານວຍການທະນາຄານພັດທະນາລາວ; |
| 2006-01/2008: | ຫົວໜ້າກົມເງິນຕາ-ຄັງສາງ ທະນາຄານແຫ່ງ ສປປ ລາວ; |
| 03/2003-06/2006: | ຜູ້ອໍານວຍການທະນາຄານຮ່ວມທຸລະກິດລາວ-ຫວຽດ; |
| 06/1998-03/2003: | ຮອງຜູ້ອໍານວຍການທະນາຄານການຄ້າຕ່າງປະເທດລາວ ຮັບຜິດຊອບຊີ້ນໍາພະແນກສິນເຊື່ອ, ພະແນກໜັງສືສິນເຊື່ອ ແລະ ພະແນກຈັດຕັ້ງ; |
| 1987-1998: | ຫົວໜ້າພະແນກຄັງສາງ ທະນາຄານການຄ້າຕ່າງປະເທດລາວ; |
| 1983-1986: | ຫົວໜ້າພະແນກຄຸ້ມຄອງວັດຖຸມີຄ່າ ຢູ່ກົມເງິນຕາ-ຄັງສາງ ທະນາຄານແຫ່ງ ສປປ ລາວ; |
| 1982: | ຮອງຫົວໜ້າພະແນກຄົ້ນຄວ້າສັງລວມ ຢູ່ຫ້ອງການທະນາຄານແຫ່ງ ສປປ ລາວ; |
| 1981: | ວິຊາການ ພະແນກຄົ້ນຄວ້າສັງລວມ ຢູ່ຫ້ອງການທະນາຄານແຫ່ງ ສປປ ລາວ. |

# ໃບມອບສິດ - Proxy

1. ຂ້າພະເຈົ້າ ..................................................................... ສັນຊາດ ..............................
   I / We ......................................................................... Nationality ..........................

ເຮືອນເລກທີ ..................... ບ້ານ..................................... ເມືອງ....................................
Residing at....................... Village................................ District................................
ແຂວງ..................................................... Province.......................................................

ເປັນຜູ້ຖືຮຸ້ນຂອງທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ
Being a shareholder of Banque Pour Le Commerce Exterieur Lao Public
ມີຮຸ້ນທີ່ຖືຈຳນວນ.....................................................ຮຸ້ນຊຶ່ງເທົ່າກັບຈຳນວນສຽງທີ່ຈະລົງຄະແນນສຽງ
Holding a total number of ..................................shares which are equivalent to the same number of votes

2. ຂໍມອບໝາຍສະມາຊິກສະພາບໍລິຫານອິດສະລະ (ເລືອກ 1 ທ່ານ) - Hereby assign the Independent Board Member (select only one):

☐ ທ່ານ ປອ. ອາຄົມ ປະເສີດ
Mr. Akhom Praserth

☐ ທ່ານ ຣສ. ທອງເພັດ ຈັນທະນີວົງ
Assoc Prof. Thongphet Chanthanivong

☐ ທ່ານ ສອນໄຊ ສີລາເພັດ
Mr. Sonexay Silaphet

☐ ທ່ານນາງ ລັດດາວັນ ຊົງວິໄລ
Mrs. Latdavanh Songvilay

☐ ***ບຸກຄົນອື່ນ ກະລຸນາລະບຸລາຍລະອຽດ / Or other person, please specify:***
ຂໍມອບໝາຍ ທ່ານ/ທ່ານ ນາງ............................................................. ອາຍຸ...............
Hereby assign Mr./Ms ............................................................... Age...............
ສັນຊາດ.....................................................ຢູ່ເຮືອນເລກທີ .....................................................
Nationality.............................................. Residing at..............................................
ບ້ານ............................... ເມືອງ............................... ແຂວງ............................
Village................................ District........................... Province.....................

ໃຫ້ເປັນຜູ້ຕາງໜ້າຂອງຂ້າພະເຈົ້າ ເພື່ອເຂົ້າຮ່ວມ ແລະ ລົງຄະແນນສຽງແທນຂ້າພະເຈົ້າຢູ່ໃນກອງປະຊຸມຜູ້ຖືຮຸ້ນ ທຄຕລ, ທີ່ຈະຈັດຂຶ້ນໃນ ເວລາ 14:30 – 16:30 ໂມງ ຂອງວັນທີ 05 ກັນຍາ 2025.
To be my/our proxy to attend and vote on my/our behalf in the Shareholders' Meeting of the Banque Pour Le Commerce Exterieur Lao Public which will be held at 14:30 PM of 05 September 2025.

3. ຂ້າພະເຈົ້າ ອະນຸຍາດໃຫ້ຜູ້ຕາງໜ້າລົງຄະແນນສຽງແທນຂ້າພະເຈົ້າ ຢູ່ໃນກອງປະຊຸມດັ່ງນີ້ (ເລືອກເອົາໜຶ່ງ ຈາກສອງທາງເລືອກລຸ່ມນີ້)

I /We authorize the proxy to vote on my/our behalf in the Meeting as follows (**choose one from the two following options**):

3.1 ☐ ໃຫ້ຜູ້ຕາງໜ້າມີສິດພິຈາລະນາ ແລະ ລົງຄະແນນສຽງໃນທຸກໆບັນຫາແທນຂ້າພະເຈົ້າ ຕາມທີ່ຜູ້ກ່ຽວເຫັນສົມຄວນ; ຫຼື
To grant the proxy to consider and vote in all agendas on my/our behalf as the proxy may deem appropriate; ***or***

3.2 ☐ ໃຫ້ຜູ້ຕາງໜ້າລົງຄະແນນສຽງຕາມຄວາມຕ້ອງການຂອງຂ້າພະເຈົ້າດັ່ງນີ້ (ຖ້າເລືອກຂໍ້ນີ້, ກະລຸນາເລືອກລົງຄະແນນ **ເຫັນດີ ຫຼື ບໍ່ເຫັນດີ** ໃນທຸກໆວາລະລຸ່ມນີ້):
To grant the proxy to vote as per my/our intention indicated in the followings (If you select this option, please choose to vote either ***approve*** or ***disapprove*** in every agenda):

**ວາລະທີ 01:** ຮັບຮອງບົດບັນທຶກກອງປະຊຸມຜູ້ຖືຮຸ້ນສະໄໝສາມັນ ທຄຕລ ປະຈຳປີ 2024;

**Agenda 01:** Approve the minutes of the Annual General Shareholders' Meeting for the year 2024;

☐ ເຫັນດີ / Approve ☐ ບໍ່ເຫັນດີ / Disapprove

**ວາລະທີ 02:** ພິຈາລະນາ ແລະ ຮັບຮອງ ການດັດແກ້ແຜນທຸລະກິດ ຂອງ ທຄຕລ ປະຈຳປີ 2025;

**Agenda 02:** Consider and approve adjustment to BCEL's Business Plan for 2025;

☐ ເຫັນດີ / Approve ☐ ບໍ່ເຫັນດີ / Disapprove

**ວາລະທີ 03:** ພິຈາລະນາ ແລະ ຮັບຮອງ ການແຕ່ງຕັ້ງຮອງປະທານສະພາບໍລິຫານ ທຄຕລ.

**Agenda 03:** Consider and approve the appointment of Vice Chairman of BCEL's Board of Directors.

☐ ເຫັນດີ / Approve ☐ ບໍ່ເຫັນດີ / Disapprove

**4.** ການລົງຄະແນນສຽງຂອງຜູ້ຕາງໜ້າທີ່ບໍ່ເປັນໄປຕາມໃບມອບສິດນີ້ ໃຫ້ຖືວ່າບໍ່ຖືກຕ້ອງ ແລະ ບໍ່ແມ່ນການລົງຄະແນນຂອງຂ້າພະເຈົ້າ.

Any votes made by the proxy contradicting to this Proxy shall be considered as invalid and shall not constitute my/our votes as the shareholder.

**5.** ໃນກໍລະນີທີ່ຂ້າພະເຈົ້າ ບໍ່ໄດ້ລະບຸຄວາມຕ້ອງການຂອງຕົນໃນການລົງຄະແນນສຽງໃນວາລະໃດໜຶ່ງ ຫຼື ລະບຸໄວ້ ບໍ່ຈະແຈ້ງ ໃຫ້ຖືວ່າຂ້າພະເຈົ້າລົງຄະແນນສຽງເຫັນດີ.

In case I/we have failed to specify my/our voting intention in any agenda or not clearly specified, my/our vote in such agenda shall be deemed approved.

**6.** ທຸກການກະທຳໃດຂອງຜູ້ຕາງໜ້າໃນກອງປະຊຸມ ທີ່ເປັນໄປຕາມໃບມອບສິດນີ້ ໃຫ້ຖືວ່າຂ້າພະເຈົ້າ ໄດ້ກະທຳເອງທຸກປະການ.

Any action made by the proxy in the meeting in accordance with this Proxy, shall be deemed as having been performed by myself/ourselves in all respects.

ທີ່..................................... ວັນທີ ....... /......../2025

Wrote at.............................date....... /......../2025

ເຊັນຜູ້ຖືຮຸ້ນທີ່ມອບໝາຍ / Signed by the shareholder

ເຊັນຜູ້ຕາງໜ້າ/Signed by the proxy

**ໝາຍເຫດ/Remark:**

1. ຜູ້ຖືຮຸ້ນ ຈະຕ້ອງແຕ່ງຕັ້ງຜູ້ຕາງໜ້າພຽງຜູ້ດຽວເຂົ້າຮ່ວມກອງປະຊຸມ ແລະ ລົງຄະແນນສຽງແທນຕົນເອງ;

   The shareholder is required to assign only one proxy to attend and vote in the meeting on the shareholder's behalf;
2. ໃບມອບສິດສະບັບນີ້ຈະຕ້ອງນຳໄປຈົດທະບຽນສານ ນຳສຳນັກງານທະບຽນສານທີ່ຢູ່ສະດວກສຳລັບທ່ານ ເພື່ອໃຫ້ຮັບປະກັນຜົນສັກສິດທາງກົດໝາຍ, ທະນາຄານມີສິດປະຕິເສດໃບມອບສິດໃດໆທີ່ບໍ່ໄດ້ຈົດທະບຽນສານ;

   This Proxy must be certified by your most convenient Court Notary Office to ensure its legal validity. BCEL may reject any Proxies or proxy authorizations without endorsement of the Court Notary Office;
3. ຜູ້ຕາງໜ້າ ຕ້ອງສະແດງເອກະສານຂອງຕົນເອງຕໍ່ ພະນັກງານປະຈຳໂຕະລົງທະບຽນ ຄື: ບັດປະຈຳຕົວ ຫຼື ປຶ້ມສຳມະໂນຄົວ ຫຼື ໜັງສືຜ່ານແດນ (ສຳລັບນັກລົງທຶນຕ່າງປະເທດ) ພ້ອມກັບສຳເນົາເອະສານປະເພດດຽວກັນນີ້ຂອງຜູ້ຖືຮຸ້ນ, ໃບມອບສິດສະບັບນີ້ ແລະ ໜັງສືເຊີນປະຊຸມ.

   The proxy must present to the officers at registration desk his/her valid ID Card, or family book or passport (in case of foreign investor) together with the copies of the same documents of the shareholder, this Proxy, and the Invitation to the Meeting.



**ທ່ານ ປອ ອາຄົມ ປຣະເສີດ**
**ຮອງປະທານສະພາບໍລິຫານ**

**ຊີວະປະຫວັດຫຍໍ້:**
ວັນ ເດືອນ ປີເກີດ: 03/05/1968
ສັນຊາດ : ລາວ
ພາສາ : ລາວ, ອັງກິດ
ຕຳແໜ່ງ : ກຳມະການອິດສະຫຼະ

**ປະຫວັດການສຶກສາ:**

2002-2005: ຮຽນປະລິນຍາເອກ ວິຊາບໍລິຫານທຸລະກິດ, ມະຫາວິທະຍາໄລຂົນສົ່ງທາງນໍ້າ ສ. ເກົາຫລີ (KMU), ເມືອງປູຊານ, ປະເທດ ສ.ເກົາຫລີ;

1994-1996: ຮຽນປະລິນຍາໂທ ວິຊາບໍລິຫານທຸລະກິດ, ສະຖາບັນພັດທະນາບໍລິຫານສາດ (NIDA), ບາງກອກ , ປະເທດໄທ;

1985-1991: ຮຽນປະລິນຍາຕີ ວິຊາກົນຈັກຫນັກ, ມະຫາວິທະຍາໄລຂົວທາງ (TADY), ເມືອງທາສເຄນ, ປະເທດ ອູສເບກິສຖານ (ອາດີດສະຫະພາບໂຊວຽດ).

**ປະຫວັດການເຮັດວຽກ:**

07/2024 - ປັດຈຸບັນ: ຮອງເລຂາທິການສະພາແຫ່ງຊາດ.

07/2021-07/2024: ຜູ້ອຳນວຍການສະຖາບັນການທະນາຄານ.

07/2018 – 07/2021: ຜູ້ອຳນວຍການທະນາຄານພັດທະນາລາວ.

10/2014 – 07/2018: ຫົວຫນ້າຄະນະສ້າງແຜນຍຸດທະສາດພັດທະນາການເງິນ-ເງິນຕາ 2021-2025 ແລະ ວິໄສທັດຮອດປີ 2030.

10/2010 – 2018: ເປັນສະມາຊິກສະພາບໍລິຫານ, ຕະຫຼາດຫຼັກຊັບລາວ.

08/2010 – 07/2018: ຫົວຫນ້າກົມຄຸ້ມຄອງສະຖາບັນການເງິນ, ທະນາຄານແຫ່ງ ສປປ ລາວ.

02/2008 – 08/2010: ຮອງຫົວຫນ້າຄະນະສ້າງຕັ້ງຕະຫຼາດຫຼັກຊັບລາວ.

02/2007 – 02/2008: ຮອງຫົວຫນ້າກົມຄຸ້ມຄອງທະນາຄານທຸລະກິດ ແລະ ສະຖາບັນການເງິນ, ທະນາຄານແຫ່ງ ສປປ ລາວ.

01/2007– 2009: ຫົວໜ້າຄະນະສ້າງແຜນຍຸດທະສາດພັດທະນາຂະແຫນງການເງິນ-ເງິນຕາຂອງ ສປປລາວ 2010-2020.

08/2006 – 09/2008: ເປັນສະມາຊິກສະພາບໍລິຫານທະນາຄານພັດທະນາລາວ.

08/2005– 02/2006: ຫົວຫນ້າພະແນກນະໂຍບາຍເງິນຕາ, ກົມນະໂຍບາຍເງິນຕາ, ທະນາຄານແຫ່ງ ສປປ ລາວ

01–08/2005: ຫົວຫນ້າພະແນກຄົ້ນຄວ້າເສດຖະກິດຕ່າງປະເທດ, ກົມຄົ້ນຄວ້າເສດຖະກິດ, ທະນາຄານແຫ່ງ ສປປ ລາວ.

1997 – 2002: ຫົວຫນ້າພະແນກຄົ້ນຄວ້າເສດຖະກິດພາຍໃນ, ກົມຄົ້ນຄວ້າເສດຖະກິດ, ທະນາຄານແຫ່ງ ສປປ ລາວ.

1992 – 1993: ເຮັດວຽກຢູ່ກະຊວງຄົມມະນາຄົມ, ໂຍທາທິການ ແລະ ຂົນສົ່ງ.



**ທ່ານ ຣສ. ທອງເພັດ ຈັນທະນີວົງ**
**ກຳມະການອິດສະຫຼະ**

**ຊີວະປະຫວັດຫຍໍ້:**
ວັນ ເດືອນ ປີເກີດ: 20/04/1962
ສັນຊາດ : ລາວ
ພາສາ: ອັງກິດ
ຕຳແໜ່ງ: ຫົວໜ້າໂຄງການ (Advancing Strategic Management, Leadership and Fundraising in Higher Education in Asia / ASTRA,) Erasmus+.

**ປະຫວັດການສຶກສາ:**
2018–2023: ຄົ້ນຄວ້າປະລິນຍາເອກ ດ້ານການບັນຊີ ຢູ່ມະຫາວິທະຍາໄລສີປະທຸມປະເທດໄທ;
2019: ໄດ້ຮັບປະກາດສະນີຍະບັດ ນັກຊ່ຽວຊານບັນຊີລາວ;
1998–2002: ຄົ້ນຄວ້າປະລິນຍາໂທ ດ້ານການພົວພັນສາກົນ ຢູ່ມະຫາວິທະຍາໄລ De Mons ປະເທດແບນຊິກ;
1998–2000: ຄົ້ນຄວ້າປະລິນຍາໂທ ບໍລິຫານທຸລະກິດ ຢູ່ Asean Institute of Technology (AIT), ປະເທດໄທ
1996–1997: ສຶກສາລະດັບປະລິນຍາຕີ ດ້ານບໍລິຫານທຸລະກິດ ໂຄງການຮ່ວມມືສະຖາບັນການເມືອງການປົກຄອງແຫ່ງຊາດ ແລະ AIT ປະເທດໄທ;
1981–1985: ສຶກສາລະດັບປະລິນຍາຕີ ດ້ານຄະນິດສາດ ຢູ່ມະຫາວິທະຍາໄລແຫ່ງຊາດ.

**ປະຫວັດການເຮັດວຽກ:**
2018-2023: ເປັນຮອງຄະນະບໍດີ ຄະນະເສດຖະສາດ ແລະ ບໍລິຫານທຸລະກິດ (ຮັບຜິດຊອບຫຼັກສູດປະລິນຍາໂທ ແລະ ປະລິນຍາເອກ), ມະຫາວິທະຍາໄລແຫ່ງຊາດ
2006: ເປັນຮອງສາດສະດາຈານ ສາຂາບໍລິຫານທຸລະກິດ (ເລກທີ 304-178/ນຍ ລົງວັນທີ 04/09/2006)
2018-2024: ເປັນປະທານຄະນະກຳມະທິການຫຼັກສູດ ການບັນຊີ ແລະ ການກວດສອບ (CPA) ຂອງສະພາວິຊາຊີບນັກບັນຊີ ແລະ ນັກກວດສອບລາວ
2018-2022: ເປັນຄະນະບໍລິຫານງານສະພາວິຊາຊີບນັກບັນຊີ ແລະ ນັກກວດສອບລາວ
2018-2024: ເປັນກຳມະການອິດສະຫຼະຂອງສະພາບໍລິຫານ ລັດວິສາຫະກິດ ລາວໂທລະຄົມ
2023-2024: ເປັນຄະນະຄົ້ນຄວ້າ ແລະ ປັບປຸງລະບົບບັນຊີວິສາຫະກິດ, ຮູບແບບເອກະສານການລາຍງານການເງິນ, ການກຳນົດຜັງບັນຊີ ແລະ ເທັກນິກການບັນທຶກບັນຊີວິສາຫະກິດ (ກະຊວງການເງິນ)
2018-2024: ເປັນອາຈານສອນຫຼັກສູດນາໆຊາດ ແລະ ປະລິນຍາໂທ ສາຂາບໍລິຫານທຸລະກິດ,ເສດຖະສາດ ຂອງມະຫາວິທະຍາໄລ ແຫ່ງຊາດ ແລະ ສະຖາບັນການທະນາຄານ
2020-2024: ເປັນອາຈານຮັບເຊີນຫຼັກສູດ MBA ມະຫາວິທະຍາໄລຂອນແກນ, ປະເທດໄທ
2015-2024: ເປັນຄູເຝິກ ມາດຕະຖານການບັນທຶກບັນຊີສາກົນ (IFRS) ແລະ ມາດຖານການກວດສອບສາກົນ (AIS)



**ທ່ານ ສອນໄຊ ສີລາເພັດ**
**ກຳມະການອິດສະຫຼະ**

**ຊີວະປະຫວັດຫຍໍ້:**
ວັນ ເດືອນ ປີເກີດ: 01/01/1977
ສັນຊາດ: ລາວ
ພາສາ: ລາວ, ອັງກິດ ແລະ ເຊັກໂກ
ຕຳແໜ່ງ: ປະທານສະພາວິຊາຊີບ ນັກບັນຊີ ແລະ ນັກກວດສອບ

**ປະຫວັດການສຶກສາ:**
2017–2021: ສຶກສາ ແລະ ຄົ້ນຄວ້າປະລິນຍາເອກ ດ້ານການບັນຊີ (PhD Candidate) ມະຫາວິທະຍາໄລສີປະທຸມ , ປະເທດໄທ;
2013–2014: ສຶກສາ ແລະ ຄົ້ນຄວ້າປະລິນຍາໂທ ດ້ານການເງິນ ຢູ່ວິທະຍາໄລເທັກໂນໂລຢີສັນຕະພົນປະເທດໄທ;
1995–2000: ສຶກສາລະດັບປະລິນຍາຕີ ດ້ານບໍລິຫານທຸລະກິດ ວິທະຍາໄລຄອມເຊັນເຕີ;
1995–1998: ສຶກສາລະດັບຊັ້ນສູງ ດ້ານການບັນຊີ ຢູ່ວິທະຍາໄລປາກປ່າສັກ;
06/2016: ເປັນສະມາຊິກຂອງ CPA ອົດສະຕາລີ;
2018: ເປັນສະມາຊິກຂອງ CPA ລາວ;
1999–2000: ເປັນສະມາຊິກຂອງ Lao Institute of Chartered Public Accountants (LICPA).

**ປະຫວັດການເຮັດວຽກ:**
05/2022–ປະຈຸບັນ: ເປັນປະທານ Lao Chamber of Professional Accountants and Auditor (LCPAA)
2015–05/2022: ເປັນຮອງປະທານ Lao Chamber of Professional Accountants and Auditor
01/2016–12/2017: ເປັນປະທານ ASEAN Federation of Accountants (AFA)
01/2014–12/2015: ຮອງເປັນປະທານ ASEAN Federation of Accountants (AFA)
07/2011–09/2014: ເປັນຜູ້ອຳນວຍການ Ernst & Young Lao Limited
07/2008–06/2011: ເປັນຜູ້ຈັດການອາວຸໂສຝ່າຍກວດສອບ Ernst & Young Lao Limited
08/2007–06/2008: ເປັນຜູ້ຈັດການຝ່າຍກວດສອບ Ernst & Young Lao Limited
05/2004–08/2007: ເປັນຜູ້ຈັດການຝ່າຍກວດສອບ PricewaterhouseCoopers (Lao) Ltd
2002–05/2004: ເປັນພະນັກງານກວດສອບອາວຸໂສປະສົບການ PricewaterhouseCoopers (Lao) Ltd
2000–2001: ເປັນພະນັກງານກວດສອບອາວຸໂສ PricewaterhouseCoopers (Lao) Ltd
1998–1999: ເປັນພະນັກງານຜູ້ຊ່ວຍກວດສອບ PricewaterhouseCoopers (Lao) Ltd



**ທ່ານ ນ. ລັດດາວັນ ຊີງວິໄລ**
**ກຳມະການອິດສະຫຼະ**

**ຊີວະປະຫວັດຫຍໍ້:**
ວັນ ເດືອນ ປີເກີດ: 27/04/1982
ສັນຊາດ: ລາວ
ພາສາ: ລາວ, ອັງກິດ
ຕຳແໜ່ງ: ຫົວໜ້າສະຖາບັນຄົ້ນຄວ້າເສດຖະກິດມະຫາພາກ, ສະຖາບັນ ເສດຖະກິດ ແລະ ສັງຄົມແຫ່ງຊາດ.

**ປະຫວັດການສຶກສາ:**
2008–2009: ຄົ້ນຄວ້າປະລິນຍາໂທ ດ້ານນະໂຍບາຍບໍລິຫານພາກລັດ ຢູ່ສະຖາບັນ GRIPS, ປະເທດຍີ່ປຸ່ນ;
2000–2005: ສຶກສາລະດັບປະລິນຍາຕີ ດ້ານເສດຖະສາດ ຄະນະເສດຖະສາດ ແລະ ບໍລິຫານທຸລະກິດ, ມະຫາວິທະຍາໄລແຫ່ງຊາດ;
2004: ນັກສຶກສາແລກປ່ຽນມະຫາວິທະຍາໄລແຫ່ງຊາດສິງກະໂປ, ປະເທດສິງກະໂປ.

**ປະຫວັດການເຮັດວຽກ:**
2020-ປະຈຸບັນ: ຫົວໜ້າສະຖາບັນຄົ້ນຄວ້າເສດຖະກິດມະຫາພາກ, ສະຖາບັນວິທະຍາສາດເສດຖະກິດ ແລະ ສັງຄົມແຫ່ງຊາດ
2019–2020: ຮັກສາການຫົວໜ້າສູນຄົ້ນຄວ້ານະໂຍບາຍເສດຖະກິດມະຫາພາກ ແລະ ປັບປຸງໂຄງສ້າງເສດຖະກິດ, ສະຖາບັນຄົ້ນຄວ້າເສດຖະກິດແຫ່ງຊາດ
2016–2019: ຮອງຫົວໜ້າສູນຄົ້ນຄວ້ານະໂຍບາຍເສດຖະກິດມະຫາພາກ ແລະ ປັບປຸງໂຄງສ້າງເສດຖະກິດ, ສະຖາບັນຄົ້ນຄວ້າເສດຖະກິດແຫ່ງຊາດ
2015–2016: ຫົວໜ້າພະແນກຢູ່ສະຖາບັນຄົ້ນຄວ້າເສດຖະກິດແຫ່ງຊາດ, ກະຊວງແຜນການ ແລະ ການລົງທຶນ
2011–2015: ຮອງຫົວໜ້າພະແນກຢູ່ສະຖາບັນຄົ້ນຄວ້າເສດຖະກິດແຫ່ງຊາດ, ກະຊວງແຜນການ ແລະ ການລົງທຶນ
2005–2011: ຜູ້ຊ່ວຍນັກຄົ້ນຄວ້າ ຢູ່ສະຖາບັນຄົ້ນຄວ້າເສດຖະກິດແຫ່ງຊາດ, ກະຊວງແຜນການ ແລະ ການລົງທຶນ

**ລະບຽບສຳລັບການດຳເນີນກອງປະຊຸມຜູ້ຖືຮຸ້ນ ທຄຕລ**

**Rules for the Shareholders' Meeting of BCEL**

## 1. ການລົງທະບຽນເພື່ອເຂົ້າຮ່ວມກອງປະຊຸມ/Registration for attending the meeting

ຜູ້ເຂົ້າຮ່ວມກອງປະຊຸມທຸກຄົນ ຕ້ອງລົງທະບຽນໃຫ້ຮຽບຮ້ອຍຕາມຂັ້ນຕອນທີ່ ທຄຕລ ກຳນົດໄວ້ ກ່ອນເຂົ້າຮ່ວມກອງປະຊຸມ ແລະ ຕ້ອງອະນຸຍາດໃຫ້ ທຄຕລ ສຳເນົາເອົາບັດປະຈຳຕົວ ຫຼື ໜັງສືຜ່ານແດນ ຫຼື ເອກະສານອື່ນໆທີ່ສາມາດໃຊ້ແທນໄດ້ ເພື່ອເອົາໄວ້ເປັນຫຼັກຖານ.

All attendees must complete registration in accordance with the procedures specified by BCEL before attending the meeting and allow BCEL to photocopy their ID cards or passports or other similar documents as evidence.

ຜູ້ຕາງໜ້າຕ້ອງສະແດງເອກະສານຂອງຕົນເອງຕໍ່ພະນັກງານປະຈຳໂຕະລົງທະບຽນ ຄື: ບັດປະຈຳຕົວ ຫຼື ປຶ້ມສຳມະໂນຄົວ ຫຼື ໜັງສືຜ່ານແດນ (ສຳລັບນັກລົງທຶນຕ່າງປະເທດ) ພ້ອມກັບ ສຳເນົາເອກະສານປະເພດດຽວກັນນີ້ຂອງຜູ້ຖືຮຸ້ນ, ແລະ ໃບມອບສິດ. ຖ້າເອກະສານເຫຼົ່ານີ້ເປັນພາສາຕ່າງປະເທດ ແມ່ນອະນຸຍາດໄດ້ສະເພາະເອກະສານທີ່ເປັນພາສາ ອັງກິດເທົ່ານັ້ນ.

For the proxy, documents to be presented to the officers at registration desk are: his/her own valid ID Card, or family book or passport (in case of foreign investor) together with the copies of the same documents of the shareholder, and letter of Proxy. If these documents are in foreign languages, only the documents in English are acceptable.

ກໍລະນີທີ່ບໍ່ໄດ້ລົງທະບຽນ ຫຼື ລົງທະບຽນບໍ່ສຳເລັດເນື່ອງຈາກຂາດຄວາມຄົບຖ້ວນດ້ານເອກະສານດັ່ງກ່າວ ຜູ້ຖືຮຸ້ນ ຫຼື ຜູ້ຕາງໜ້າ ຈະບໍ່ມີສິດລົງຄະແນນສຽງ, ຕັ້ງຄຳຖາມ ຫຼື ມີຄຳເຫັນຕໍ່ທີ່ປະຊຸມ.

Without registration or the registration is incomplete due to absence of the said documents, shareholders or proxies shall have no right to vote, question or make comments in the meeting.

## 2. ອົງປະຊຸມ/Quorum

ກອງປະຊຸມສາມາດດຳເນີນໄດ້ກໍ່ຕໍ່ເມື່ອມີຜູ້ຖືຮຸ້ນ ຫຼື ຜູ້ຕາງໜ້າທີ່ເຂົ້າຮ່ວມກອງປະຊຸມຢ່າງໜ້ອຍ 2 ຄົນຂຶ້ນໄປ ແລະມີຈຳນວນຮຸ້ນທີ່ຖືເກີນ 51% ຂອງຈຳນວນຮຸ້ນສາມັນທັງໝົດ ຕາມທີ່ໄດ້ກຳນົດໄວ້ໃນ ກົດລະບຽບຂອງທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ.

Shareholders' meeting can commence only if there are at least 2 or more shareholders attending the meeting and their shares shall be more than 51% of the total shares, pursuant to the Articles of Association of Banque pour le Commerce Exterieur Lao Public.

## 3. ການດຳເນີນກອງປະຊຸມ/Rules for proceeding

- ທ່ານປະທານສະພາບໍລິຫານ ທຄຕລ ຫຼື ຜູ້ທີ່ໄດ້ຮັບມອບໝາຍ ເປັນປະທານກ່າວເປີດ ແລະ ນຳພາດຳເນີນກອງປະຊຸມ.

  The Chairman of BCEL's Board of Directors or designated person will preside over and lead the meeting;

- ທ່ານປະທານກອງປະຊຸມ ເປັນຜູ້ສະເໜີຫົວຂໍ້ຂອງແຕ່ລະວາລະ ແລະ ເປັນຜູ້ສັ່ງໂຫວດ ຄະແນນແຕ່ລະວາລະ.

  The Chairman of the meeting will propose the title of each agenda and order the voting of each agenda.
- ຜູ້ອຳນວຍການ ທຄຕລ ເປັນຜູ້ດຳເນີນສະເໜີ ເນື້ອໃນຂອງແຕ່ ລະວາລະໃນກອງປະຊຸມ.

  The Managing Director of BCEL will present details of each agenda to the meeting.
- ຫຼັງຈາກທີ່ທ່ານຜູ້ອຳນວຍການ ໄດ້ສະເໜີເນື້ອໃນຂອງວາລະແລ້ວ, ປະທານກອງປະຊຸມຈະສະເໜີໃຫ້ຜູ້ຖືຮຸ້ນ ຫຼື ຜູ້ຕາງໜ້າທີ່ມີຄຳຖາມ ຫຼື ຄຳເຫັນຕໍ່ວາລະທີ່ກຳລັງຖືກພິຈາລະນາຢູ່. ກໍລະນີມີຄຳຖາມ ທ່ານຜູ້ອຳນວຍການ ຈະເປັນຜູ້ໃຫ້ຄຳອະທິບາຍຊີ້ແຈງ. ຈາກນັ້ນ, ຖ້າບໍ່ມີຄຳຖາມໃດໆຕໍ່ແລ້ວ ປະທານກອງປະຊຸມຈະສະເໜີໃຫ້ຜູ້ຖືຮຸ້ນຫຼືຜູ້ຕາງໜ້າລົງມະຕິຕໍ່ວາລະດັ່ງກ່າວ.
- After the Managing Director has presented details of each agenda, the Chairman will ask the Shareholders and Proxies to make necessary comments or questions. Should there is a question, the Managing Director shall give the answer forthwith. Only when there is no any further question or comment, the Chairman shall ask the Shareholders and Proxies to vote on the agenda
- ຜູ້ເຂົ້າຮ່ວມກອງປະຊຸມ ຕ້ອງປິດສຽງໂທລະສັບ ຫຼື ອຸປະກອນການສື່ສານທຸກຢ່າງ ແລະ ບໍ່ສົ່ງສຽງດັງລົບກວນຕະຫຼອດໄລຍະຂອງການດຳເນີນກອງປະຊຸມ.

  All attendees must switch off the sound of their mobile phones or any communication devices and must not make any disturbing noise throughout the meeting.

## 4. ພາສາທີ່ນຳໃຊ້ໃນກອງປະຊຸມ/Language in the meeting

- ພາສາທີ່ນຳໃຊ້ຢູ່ໃນກອງປະຊຸມແມ່ນພາສາລາວ
- The language used in the meeting is Lao language.

## 5. ຜູ້ມີສິດລົງຄະແນນສຽງ/Persons eligible to vote

- ມີແຕ່ຜູ້ຖືຮຸ້ນ ຫຼື ຜູ້ຕາງໜ້າທີ່ໄດ້ຮັບມອບໝາຍຢ່າງຖືກຕ້ອງ ຊຶ່ງໄດ້ລົງທະບຽນເຂົ້າຮ່ວມກອງ ປະຊຸມຮຽບຮ້ອຍແລ້ວເທົ່ານັ້ນ ທີ່ຈະມີສິດລົງຄະແນນສຽງ.

  Only the shareholders or proxies who have registered to attend the meeting are eligible to vote.
- ຜູ້ຖືຮຸ້ນ ຫຼື ຜູ້ຕາງໜ້າທີ່ບໍ່ໄດ້ລົງທະບຽນເຂົ້າຮ່ວມກອງປະຊຸມ ແລະ ຜູ້ເຂົ້າຮ່ວມອື່ນ ຈະບໍ່ມີ ສິດໃນການລົງຄະແນນສຽງ.

  Any shareholders or proxies who have not registered to attend the meeting and other attendees will not be eligible to vote.

## 6. ການລົງຄະແນນສຽງ/Voting

ປະທານກອງປະຊຸມ ຈະເປັນຜູ້ສະເໜີວາລະທີ່ຕ້ອງການໃຫ້ລົງຄະແນນສຽງ ໂດຍຈະເຊີນ ພຽງແຕ່ຜູ້ຖືຮຸ້ນ ຫຼື ຜູ້ຕາງໜ້າທີ່ໄດ້ຮັບມອບໝາຍ ທ່ານໃດທີ່ບໍ່ເຫັນດີຕໍ່ບັນຫາທີ່ກອງປະຊຸມໄດ້ນຳ ສະເໜີເທົ່ານັ້ນລົງຄະແນນສຽງ ເພື່ອຄວາມສະດວກໃນການນັບຄະແນນສຽງ (ໝາຍຄວາມວ່າ ຜູ້ຖືຮຸ້ນທ່ານໃດທີ່ເຫັນດີຕໍ່ການສະເໜີດັ່ງກ່າວ ກໍບໍ່ຈຳເປັນຕ້ອງລົງຄະແນນສຽງໃດໆ).

The Chairman of the meeting will propose the agendas that require voting, and only the shareholders or proxies who DO NOT AGREE with the matters proposed by the meeting are invited to vote so as to facilitate vote counting process (meaning that for those who agree with such matters are not necessary to cast a vote).

**7. ຜົນສັກສິດຂອງການລົງຄະແນນສຽງ/Effectiveness of voting**

- ສຳລັບການລົງມະຕິທົ່ວໄປ, ການລົງຄະແນນສຽງທີ່ບໍ່ເຫັນດີຈະມີຜົນສັກສິດ ກໍຕໍ່ເມື່ອມີຄະແນນສຽງຫລາຍກວ່າເຄິ່ງໜຶ່ງຂອງ ຈຳນວນຮຸ້ນ ທຄຕລ ທັງໝົດໃນທີ່ປະຊຸມ.

  For ordinary resolutions, the "Disapprove votes" will become effective only if such votes account for more than half of the total number of BCEL shares attending the meeting

- ສຳລັບການລົງມະຕິສະເພາະ, ການລົງຄະແນນສຽງບໍ່ເຫັນດີຈະມີຜົນສັກສິດ ກໍຕໍ່ເມື່ອມີຄະແນນສຽງຫລາຍກວ່າ ໜຶ່ງສ່ວນສາມຂອງຈຳນວນຜູ້ຖືຮຸ້ນ ຫຼື ຜູ້ຕາງໜ້າທັງໝົດທີ່ເຂົ້າຮ່ວມກອງປະຊຸມ ແລະ ມີຮຸ້ນລວມກັນຫຼາຍກວ່າ 20% ຈຳນວນຮຸ້ນ ທຄຕລ ທັງໝົດ.

  For special resolution, the "Disapprove votes" will become effective only if such votes account for more than one third of total shareholders or proxies attending the meeting and having shares more than 20% of the total BCEL shares.

- ທຸກບັດລົງຄະແນນສຽງ "ບໍ່ເຫັນດີ" ຕໍ່ວາລະໃດໜຶ່ງທີ່ຖືກສົ່ງໃຫ້ທີ່ປະຊຸມຫຼັງຈາກທີ່ກອງປະຊຸມໄດ້ປະກາດຜົນການລົງຄະແນນຂອງວາລະນັ້ນແລ້ວ, ຈະຖືວ່າເປັນບັດລົງຄະແນນສຽງທີ່ໃຊ້ບໍ່ໄດ້.

  Any and All "Disapprove votes" in any Agenda which are submitted to the Meeting after the Meeting has already announced the voting result of such Agenda shall be null and void.

**8. ການແຈ້ງຜົນການລົງຄະແນນສຽງ/Notification of voting result**

ຜູ້ເຂົ້າຮ່ວມກອງປະຊຸມ ຈະໄດ້ຮັບແຈ້ງກ່ຽວກັບຜົນການນັບຄະແນນຢູ່ໃນທີ່ປະຊຸມເລີຍ ໂດຍ ການນັບຄະແນນສຽງ ຈະຖືເອົາໜຶ່ງຮຸ້ນ ເທົ່າກັບໜຶ່ງຄະແນນສຽງ.

Attendees will be informed about the voting result forthwith in the meeting with one share equals one vote.

**9. ການສະເໜີຄຳຖາມ/Questions**

- ປະທານກອງປະຊຸມຈະສະເໜີໃຫ້ຜູ້ຖືຮຸ້ນ ຫຼື ຜູ້ຕາງໜ້າທີ່ໄດ້ຮັບມອບໝາຍຢ່າງຖືກຕ້ອງ ມີຄຳຖາມ ຫຼື ສະແດງຄຳເຫັນທີ່ບໍ່ນອນໃນວາລະຂອງກອງປະຊຸມ, ໃນຕອນທ້າຍກອງປະຊຸມພາຍຫຼັງທີ່ສຳເລັດຄົບຖ້ວນທຸກວາລະແລ້ວ. ສຳລັບຜູ້ເຂົ້າຮ່ວມອື່ນໆ ຈະບໍ່ມີສິດສະເໜີຄຳຖາມ ຫຼື ມີຄຳເຫັນໃນທີ່ປະຊຸມ, ຍົກເວັ້ນກໍລະນີທີ່ປະທານກອງປະຊຸມໄດ້ສະເໜີໃຫ້ຜູ້ເຂົ້າຮ່ວມດັ່ງກ່າວ ປະກອບຄຳເຫັນຕໍ່ທີ່ປະຊຸມ.

  The chairman of the meeting will ask the shareholders or proxies to question or make comments on the issues which are not included in the agenda of the meeting, after the meeting has completed its all agenda. Other attendees are not eligible to question or make any comments, unless the Chairman asks such attendees to question or make comments in the meeting.

- ເມື່ອມີການສະເໜີຈາກປະທານກອງປະຊຸມແລ້ວນັ້ນ, ຜູ້ຖືຮຸ້ນ ຫຼື ຜູ້ຕາງໜ້າທີ່ປະສົງຈະມີ ຄຳຖາມ ຫຼື ສະແດງຄຳເຫັນຕໍ່ທີ່ປະຊຸມ ຕ້ອງຍົກມືຂຶ້ນ ພ້ອມທັງສະແດງເຄື່ອງໝາຍຕາມທີ່ ທຄຕລ ກຳນົດໃຫ້ ເພື່ອສະແດງວ່າແມ່ນຜູ້ຖືຮຸ້ນ ຫຼື ຜູ້ຕາງໜ້າທີ່ໄດ້ຮັບມອບໝາຍຢ່າງແທ້ຈິງ. ຖ້າຜູ້ຖືຮຸ້ນ ຫຼື ຜູ້ຕາງໜ້າ ທີ່ໄດ້ຮັບມອບໝາຍ ຫາກບໍ່ສະແດງເຄື່ອງໝາຍ

ດັ່ງກ່າວແລ້ວນັ້ນ ປະທານກອງປະຊຸມ ຫຼື ຄະນະອຳນວຍການ ທຄຕລ ຫຼື ຄະນະຮັບຜິດຊອບກອງປະຊຸມ ມີສິດສະເໜີຄັດຄ້ານຄຳຖາມ ຫຼື ຄຳເຫັນຂອງຜູ້ກ່ຽວ ແລະ ກອງປະຊຸມ ຈະບໍ່ມີພັນທະໃນການຕອບຄຳຖາມຂອງຜູ້ກ່ຽວໃນກໍລະນີດັ່ງກ່າວ.

Having been asked by the Chairman, any shareholders or proxies desirous to question or make comments in the meeting must raise their hands and show the symbol as given by BCEL to confirm that they are truly the shareholders or proxies. Should the shareholders or proxies do not show such symbol, the Chairman or BCEL Directors, or Committee in charge of the meeting may reject questions or comments made by the shareholders or proxies, and in this case the meeting shall not be obliged to answer such questions.

## ຄຳແນະນຳກ່ຽວກັບເອກະສານ ແລະ ຫຼັກຖານທີ່ຕ້ອງນຳມາສະເໜີໂຕເພື່ອເຂົ້າຮ່ວມກອງປະຊຸມ
## Instruction about the documents and evidence to be presented prior to attending the meeting

ເພື່ອຄວາມສະດວກໃນການລົງທະບຽນເຂົ້າຮ່ວມກອງປະຊຸມ ຜູ້ຖືຮຸ້ນຂອງທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ, ຜູ້ຖືຮຸ້ນ ຫຼື ຜູ້ຕາງໜ້າ ທີ່ຈະເຂົ້າຮ່ວມກອງປະຊຸມ ກະລຸນານຳເອົາໜັງສືເຊີນປະຊຸມ, ໃບເຂົ້າຮ່ວມກອງປະຊຸມທີ່ອອກໃຫ້ໂດຍຕະຫຼາດຫຼັກຊັບລາວ ແລະ ໃບມອບສິດ (ສຳລັບຜູ້ຕາງໜ້າ) ມາພ້ອມເອກະສານທີ່ສາມາດນຳໃຊ້ຢັ້ງຢືນຕົນເອງ ຕາມແຕ່ລະກໍລະນີດັ່ງນີ້:

For convenience in registration process to attend the Shareholders ' Meeting of Banque Pour Le Commerce Exterieur Lao Public, the shareholders or the proxies who will attend the Meeting are required to bring the Invitation to the Meeting, the Letter for attending the meeting issued by the Lao Securities Exchange and the Proxy (applicable for the proxy only) together with the documents for proof of identity as indicated for each circumstance below:

1. **ຜູ້ເຂົ້າຮ່ວມທີ່ເປັນບຸກຄົນ / attendees who are natural persons**

ໃຫ້ນຳເອົາເອກະສານໃດໜຶ່ງຂອງຕົນດັ່ງຕໍ່ໄປນີ້ ມາສະແດງເວລາລົງທະບຽນ

Shall present one of the following documents of their own at the time of registration.

- ບັດປະຈຳຕົວ/Identification Card
- ສຳມະໂນຄົວ/Family book
- ໜັງສືຜ່ານແດນ (ສຳລັບນັກລົງທຶນຕ່າງປະເທດ)/Passport (for foreign investors)

2. **ຜູ້ເຂົ້າຮ່ວມທີ່ເປັນນິຕິບຸກຄົນ / Attendees who are legal persons**

ໃຫ້ນຳເອົາເອກະສານໃດໜຶ່ງທີ່ກຳນົດໄວ້ໃນຂໍ້ 1 ເທິງນີ້ ພ້ອມກັບເອກະສານໃດໜຶ່ງດັ່ງຕໍ່ໄປນີ້ ມາສະແດງ ເວລາລົງທະບຽນ:

Shall present one of the documents as given in 1. above plus one of the following documents at the time of registration:

- ໃບອະນຸຍາດລົງທຶນ/ Investment License
- ໃບທະບຽນວິສາຫະກິດ/ Certificate of Enterprise Registration (Affidavit)
- ໃບທະບຽນອາກອນສະບັບຫຼ້າສຸດ/ most recent Tax Certificate

ສຳລັບຜູ້ເຂົ້າຮ່ວມທີ່ບໍ່ແມ່ນຜູ້ອຳນວຍການ ຕ້ອງໄດ້ນຳເອົາໃບມອບສິດຈາກຜູ້ອຳນວຍການທີ່ມີສິດອຳນາດມາພ້ອມຕື່ມອີກ.

For attendee who is not the authorized director shall have the Proxy as attached hereto signed by the authorized director.

ເອກະສານ ແລະ ຫຼັກຖານທີ່ຕ້ອງນຳມາສະເໜີໂຕ ເພື່ອເຂົ້າຮ່ວມກອງປະຊຸມຊຶ່ງເປັນພາສາຕ່າງປະເທດ ຕ້ອງແປເປັນ ພາສາລາວ ໂດຍມີການເຊັນຢັ້ງຢືນຄວາມຖືກຕ້ອງໃນການແປຈາກບໍລິສັດແປພາສາທີ່ໜ້າເຊື່ອຖືໄດ້. ສຳລັບພາສາຕ່າງ ປະເທດ ແມ່ນອະນຸຍາດໃຫ້ສຳລັບພາສາອັງກິດເທົ່ານັ້ນ. ທຄຕລ ມີສິດປະຕິເສດເອກະສານອ້າງອີງໃດໆ ທີ່ບໍ່ເປັນໄປຕາມ ການກຳນົດນີ້.

All documents and evidence in a foreign language which are required to present prior to attending the Meeting must be translated into Lao language and the translation shall be certified by an acceptable translation company. The foreign language is permitted only for English. BCEL has the right to reject any documents contradicting this provision.

## ຄໍາແນະນໍາ ກ່ຽວກັບ ການລົງຄະແນນສຽງ
## Vote Instruction

1. ຜູ້ເຂົ້າຮ່ວມກອງປະຊຸມ ຈະໄດ້ຮັບບັດລົງຄະແນນສຽງສໍາລັບທຸກໆວາລະ ທີ່ຕ້ອງການໃຫ້ມີການລົງຄະແນນສຽງ ໃນເວລາລົງທະບຽນເຂົ້າຮ່ວມກອງປະຊຸມ. ການລົງຄະແນນສຽງໂດຍຜູ້ຕາງໜ້າ ຊຶ່ງຜູ້ຖືຮຸ້ນທີ່ມອບໝາຍສິດໄດ້ລະບຸຢ່າງຈະແຈ້ງແລ້ວກ່ຽວກັບ ການລົງຄະແນນໃນແຕ່ລະວາລະ ທະນາຄານ ຈະບັນທຶກການລົງຄະແນນສຽງ ໃນເວລາລົງທະບຽນ ໂດຍທີ່ຜູ້ຕາງໜ້າຈະບໍ່ຕ້ອງລົງແນນສຽງອີກ.
   The attendees will be given a ballot for voting in each agenda requiring a vote at the time of registration. For the case of proxy in which the voting in each agenda has been clearly specified by the shareholder in the Proxy, BCEL will record such votes at the time of the registration and the proxy will not be required to vote.

2. ກອງປະຊຸມ ຈະເຊີນພຽງແຕ່ຜູ້ຖືຮຸ້ນທ່ານໃດທີ່ ບໍ່ເຫັນດີ ຕໍ່ບັນຫາທີ່ກອງປະຊຸມໄດ້ນໍາສະເໜີເທົ່ານັ້ນ ລົງຄະແນນ ສຽງ (ໝາຍຄວາມວ່າ ຜູ້ຖືຮຸ້ນທ່ານໃດທີ່ ເຫັນດີຕໍ່ການແຕ່ງຕັ້ງດັ່ງກ່າວ ກໍບໍ່ຈໍາເປັນຕ້ອງລົງຄະແນນສຽງໃດໆ).
   Only the shareholders who DO NOT AGREE with the matters proposed by the meeting are invited to vote (meaning that for those who agree with such appointment are not necessary to make any vote)

3. ໃນການລົງຄະແນນສຽງ ຂໍໃຫ້ທ່ານປະກອບຂໍ້ມູນໃສ່ບັດລົງຄະແນນສຽງທີ່ໄດ້ແຈກຢາຍໃຫ້. ໃນນັ້ນ ຕ້ອງໄດ້ລະບຸ ຢ່າງຈະແຈ້ງກ່ຽວກັບຊື່ ແລະ ນາມສະກຸນຂອງທ່ານ, ຈໍານວນຮຸ້ນ ທຄຕລ ທີ່ທ່ານຖືຢູ່ (ຖ້າບໍ່ມີຂໍ້ມູນດັ່ງກ່າວຢູ່ໃນບັດລົງຄະແນນສຽງ) ແລະ ໃຫ້ໝາຍຕີນກາໃສ່ຫ້ອງ ບໍ່ເຫັນດີ.
   To vote, kindly fill in the distributed ballot in which you must specify clearly about your name and surname, and the total number of BCEL shares you are holding (if such information is not available in the ballot) and mark a cross in the Disapprove box.

4. ຫລັງຈາກທ່ານລົງຄະແນນສຽງຮຽບຮ້ອຍແລ້ວ ຂໍໃຫ້ທ່ານຍົກບັດດັ່ງກ່າວຂຶ້ນ ເພື່ອໃຫ້ຄະນະຮັບຜິດຊອບເກັບເອົາ ແລະ ຮວບຮວມຄະແນນສຽງ.
   After you have clearly casted your vote, kindly raise your hand with the ballot, so the organizers can take the ballot and count the votes.

5. ທ່ານຈະໄດ້ຮັບແຈ້ງກ່ຽວກັບຜົນການນັບຄະແນນຢູ່ໃນທີ່ປະຊຸມເລີຍ ໂດຍການນັບຄະແນນສຽງຈະຖືເອົາໜຶ່ງຮຸ້ນ ເທົ່າກັບໜຶ່ງຄະແນນສຽງ.
   You will be informed about the voting result right in the meeting with one share equals one vote.

6. ການລົງຄະແນນສຽງບໍ່ເຫັນດີຈະມີຜົນສັກສິດ ກໍຕໍ່ເມື່ອມີຄະແນນສຽງຫລາຍກວ່າເຄິ່ງໜຶ່ງຂອງຈໍານວນຮຸ້ນ ທຄຕລ ທັງໝົດໃນທີ່ປະຊຸມ, ຍົກເວັ້ນວາລະໃດທີ່ຕ້ອງລົງຄະແນນສຽງດ້ວຍມະຕິສະເພາະນັ້ນ ຄະແນນສຽງບໍ່ເຫັນດີຕ້ອງມີຄະແນນຫຼາຍກວ່າ 1/3 ຂອງຈໍານວນຮຸ້ນ ທຄຕລ ທັງໝົດໃນທີ່ປະຊຸມ.
   The Disapproval votes will become effective only if such votes account for more than half of the total number of BCEL shares attending the meeting, except for any agenda that requires a specific resolution, Disapproval vote shall account for more than 1/3 of the total number of BCEL shares attending the meeting.

**ໝາຍເຫດ/Remark:**

1. ຜູ້ເຂົ້າຮ່ວມທີ່ບໍ່ໄດ້ລົງທະບຽນເຂົ້າປະຊຸມ ຈະບໍ່ມີສິດໃນການລົງຄະແນນສຽງ.
   Any attendees who failed to make registration will not be eligible to votes.
2. ທຸກບັດລົງຄະແນນສຽງບໍ່ເຫັນດີຕໍ່ວາລະໃດໜຶ່ງ ທີ່ຖືກສົ່ງໃຫ້ທີ່ປະຊຸມ ຫຼັງຈາກທີ່ກອງປະຊຸມໄດ້ປະກາດຜົນການລົງຄະແນນຂອງວາລະນັ້ນແລ້ວ, ຈະຖືວ່າເປັນບັດລົງຄະແນນສຽງທີ່ໃຊ້ບໍ່ໄດ້.
   All disapprove votes in any Agenda which is submitted to the Meeting after the Meeting has announced the voting result of such Agenda shall be deemed invalid.

# ແຜນທີ່ສະຖານທີ່ຈັດກອງປະຊຸມຜູ້ຖືຮຸ້ນຂອງ ທຄຕລ / BCEL Shareholder Meeting

- ກອງປະຊຸມຜູ້ຖືຮຸ້ນ ທຄຕລ ສະໄໝວິສາມັນ ປະຈຳປີ 2025 ໃນວັນທີ 05/09/2025 ເວລາ 14:30 – 16:30 ໂມງ ທີ່ຫ້ອງປະຊຸມ Grand Ballroom, ໂຮງແຮມ ລາວພລາຊ້າ

- BCEL's Extra-Ordinary General Shareholder meeting 2024, Date 05/09/2025, 14:30-16:30 at Grandball Room, Lao Plaza hotel

